# ຄວາມທ່ຽງທຳໃນວຽກງານການປ່ຽນແປງ ດິນ ຟ້າອາ ກາດ ແລະ ແຜນງານ REDD+

## ຄູ່ມືສຳລັບຜູ້ອຳນວຍຄວາມສະດວກຢູ່ຂັ້ນຮາກຖານ

ຄຳຖາມ ແລະ ຄຳຕອບ



USAID FROM THE AMERICAN PEOPLE

Norad

RECOFTC THE CENTER FOR PEOPLE AND FORESTS

**ຄວາມທ່ຽງທຳໃນວຽກງານງການປ່ຽນແປງດິນຟ້າອາກາດ ແລະ ແຜນງານ** REDD+

ຄູ່ມືສຳລັບຜູ້ອຳນວຍຄວາມສະດວກຢູ່ຂັ້ນຮາກຖານ

ຄຳຖາມ ແລະ ຄຳຕອບ

ສະຫງວນລິຂະສິດ © RECOFTC ພະຈິກ 2014

ບັງກອກ, ປະເທດໄທ

ຮູບພາບທັງໝົດແມ່ນຂອງສູນຝຶກອົບຮົມປ່າໄມ້ຊູມຊົນ (RECOFTC).

ການຜະລິດປຶ້ມຫົວນີ້ອີກເທື່ອນຶ່ງແມ່ນເພື່ອຈຸດປະສົງດ້ານການສຶກສາແລະ ບໍ່ແມ່ນເພື່ອຈຸດປະສົງທາງທຸລະກິດ ທີ່ໄດ້ຖືກອະນຸມັດ ໂດຍປາດສະຈາກການອະນຸຍາດຢ່າງເປັນລາຍລັກອັກສອນ ຈາກຜູ້ຖືລິຂະສິດ ເພາະມີການສະແດງເຖິງ ການຮູ້ບຸນຄຸນ ຕໍ່ແຫຼ່ງຂໍ້ມູນຕ່າງໆ ໃນເອກະສານລະບັບນີ້ແລ້ວ. ຖ້າການຜະລິດປຶ້ມຫົວນີ້ອີກເທື່ອໜຶ່ງ ເພື່ອຈຸດປະສົງການຈຳໜ່າຍອີກ ຫຼື ເພື່ອການຄ້າ ນັ້ນ ແມ່ນຈະບໍ່ສາມາພະລິດໄດ້ ໂດຍປາດສະຈາກການອະນຸຍາດເປັນລາຍລັກອັກສອນຈາກຜູ້ຖືລິຂະສິດ.

ປຶ້ມຫົວນີ້ໄດ້ຮັບການພັດທະນາໂດຍແຜນງານການສ້າງຄວາມສາມາດຢູ່ຂັ້ນຮາກຖານສຳລັບແຜນງານ REDD+ ປະຈຳອາຊີຂອງສູນ RECOFTC (ໂຄງການຮາກຖານຂອງສູນ RECOFTC) ທີ່ໄດ້ຮັບທຶນຈາກອົງການພັດທະນາ ແລະ ການຮ່ວມມືແຫ່ງປະເທດນອກແວ (NORAD) ແລະ ແຜນງານສ້າງໂອກາດ ແລະ ເຄືອຄ່າຍທີ່ເຂັ້ມແຂງຢູ່ຂັ້ນຮາກຖານໃນເຂດແມ່ນ້ຳຂອງ (ແຜນງານ GREEN Mekong), ທີ່ໄດ້ຮັບທຶນຈາກອົງການພັດທະນາສາກົນ ແຫ່ງປະເທດສະຫະລັດອາເມລິກາ (USAID).
ທັດສະນະຕ່າງໆ ທີ່ສະແດງອອກໃນເອກະສານສະບັບນີ້ ບໍ່ໄດ້ສະທ້ອນໃຫ້ ເຫັນເຖິງໂຄງການຂອງສູນ RECOFTC - ສູນສຳລັບປະຊາຊົນ ແລະ ປ່າໄມ້, ອົງການ NORAD ແລະ ອົງ ການ . ພວກຂ້າພະເຈົ້າຂໍປະຕິເສດຄວາມຮັບຜິດຊອບຕໍ່ຂໍ້ຜິດພາດ ຫຼື ຄວາມຂາດຕົກບົກພ່ອງ ຂອງການແປເອກະສານສະບັບນີ້ ຈາກເອກະສານສະບັບຕົ້ນທີ່ເປັນພາສາອັງກິດ ເປັນພາສາອື່ນໆ.

# ບົດສະແດງຄວາມຮູ້ບຸນຄຸນ

ສູນ RECOFTC ຂໍສະແດງຄວາມຮູ້ບຸນຄຸນມາຍັງອົງການ NORAD ສໍາລັບ ການສະໜັບສະໜູນດ້ານການເງິນໃຫ້ແກ່ໂຄງການຮາກຖານຂອງແຜນງານ REDD+ ແລະ ອົງການພັດທະນາສາກົນແຫ່ງປະເທດສະຫະລັດອາເມລິກາ ສໍາລັບ ການສະໜັບສະໜູນດ້ານການເງິນໃຫ້ແກ່ແຜນງານ GREEN Mekong.

# ຈຸດປະສົງຂອງສິ່ງພິມນີ້

ຄູ່ມືສະບັບນີ້ແມ່ນຜົນໄດ້ຮັບຂອງການຮ່ວມມືລະຫວ່າງໂຄງການຕ່າງໆຂອງສູນ RECOFTC ປະຈຳພາກພື້ນ - ແຜນງານສ້າງຄວາມເຂັ້ມແຂງຢູ່ຂັ້ນຮາກຖານຂອງແຜນງານ REDD+ ພາກພື້ນອາຊີ (ໂຄງການຮາກຖານຂອງ ແຜນງານ REDD+[1] ) ແລະ ແຜນງານສ້າງໂອກາດ ແລະ ເຄືອຄ່າຍທີ່ເຂັ້ມແຂງ ຢູ່ຂັ້ນຮາກຖານໃນເຂດແມ່ນ້ຳ ຂອງ (ແຜນງານ GREEN Mekong). ຈຸດປະສົງຂອງຄູ່ມືຄຳຖາມ ແລະ ຄຳຕອບສະບັບນີ້ ແມ່ນເພື່ອສະໜັບ ສະໜູນໃຫ້ແກ່ຜູ້ອຳນວຍຄວາມສະດວກຢູ່ຂັ້ນຮາກຖານເຊິ່ງເປັນຜູ້ທີ່ເຂົ້າຮ່ວມໃນແຜນງານການຝຶກອົບຮົມ ກ່ຽວກັບ ການສົ່ງເສີມຄວາມທ່ຽງທຳໃນສັງຄົມ ໃນການຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດ, ໂດຍສະ ເພາະໃນການຫຼຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ (ແຜນງານ REDD+[1]). ເອກະສານສະບັບນີ້ ຍັງເປັນເອກະສານອ້າງອີງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຫຼັກ ໃນລະດັບ ແຂວງ ແລະ ລະດັບເມືອງອີກດ້ວຍ, ໂດຍສະເພາະພະນັກງານປ່າໄມ້, ເຊິ່ງເປັນຜູ້ທີ່ໄດ້ເຂົ້າຮ່ວມໃນຂະບວນ ການຮຽນຮູ້ລະດັບທ້ອງຖິ່ນ ແລະ ລະດັບພາກພື້ນ ເພື່ອສົ່ງເສີມຄວາມທ່ຽງທຳໃນການພັດທະນາ ມາດຕະການ ຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດ, ແລະ ການປະຕິບັດອື່ນໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້.

ເຖິງແມ່ນວ່າຈະມີຄວາມຫຼາກຫຼາຍ ແລະ ມີຄວາມສະຫຼັບສັບຊ້ອນ ທາງດ້ານວິທີການ ຂອງວຽກງານ REDD+ ກໍ່ຕາມ, ແຕ່ວັ່ງບໍ່ດົນມານີ້ ສື່ສິ່ງພິມຕ່າງໆຂອງແຜນງານ REDD+ ທີ່ພົວພັນເຖິງບັນຫາຄວາມທ່ຽງທຳແມ່ນໄດ້ຮັບການຈັດພິມ, , ເຊິ່ງຄວາມເປັນຈິງກໍຍັງມີຢູ່ວ່າ ພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນຮາກຖານມີຄວາມສາມາດເຂົ້າເຖິງສິ່ງພິມກ່ຽວກັບຄວາມທ່ຽງທຳຂອງແຜນງານ REDD+ ທີ່ມີຄວາມກະທັດຮັດ ແລະ ສາມາດອ່ານເຂົ້າໃຈໄດ້ງ່າຍ ນັ້ນຍັງມີຄວາມຈຳກັດ. ຈາກຜົນໄດ້ຮັບດັ່ງກ່າວ, ຍັງມີສິ່ງທ້າທາຍສຳລັບ ພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນຮາກຖານ ໃນການທຳຄວາມເຂົ້າໃຈ ແລະ ນຳໃຊ້ຂໍ້ມູນຕ່າງໆທີ່ກ່ຽວຂ້ອງເຂົ້າໃນການ ສົ່ງເສີມຄວາມທ່ຽງທຳ ຢູ່ລະດັບທ້ອງຖິ່ນ. ນອກຈາກນັ້ນແລ້ວ, ແນວຄວາມຄິດຂອງຄວາມທ່ຽງທຳດ້ານສັງຄົມ ແມ່ນມີຄວາມສະຫຼັບສັບຊ້ອນ, ຫຼື ແມ້ກະທັ້ງເປັນ ມີຄວາມໝາຍລວມໆ; ດັ່ງນັ້ນ ການອະທິບາຍແບບງ່າຍດາຍທີ່ສາມາດເຂົ້າໃຈໄດ້ງ່າຍ ໃນລະດັບທ້ອງຖິ່ນນັ້ນ ແມ່ນມີຄວາມຈຳເປັນ. ຄວາມສາມາດໃນລະດັບຕ່ຳຂອງພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນຮາກຖານ, ລວມທັງອົງການຈັດຕັ້ງສັງຄົມທ້ອງຖິ່ນ ແລະ ອົງການບໍ່ສັງກັດລັດຖະບານ (CSO ແລະ NGO) ນັ້ນ ເປັນສິ່ງກີດຂວາງເຂົາເຈົ້າ ໃນການນຳສະເໜີທັດສະນະ ແລະ ຄວາມປາດຖະໜາຂອງຕົນໃຫ້ແກ່ຜູ້ທີ່ມີອຳນາດໃນການຕັດສິນໃຈໄດ້ຢ່າງມີຜະສິດທິຜົນ, ເຊິ່ງໄດ້ເຮັດໃຫ້ເຂົາໄດ້ຖືກຖືວ່າເປັນຄົນທີ່ບໍ່ມີຄວາມສາມາດ ໂດຍກຸ່ມຄົນທີ່ມີອຳນາດຈຳນວນໜຶ່ງ ຜູ້ທີ່ໄດ້ຮັບຜົນປະໂຫຍດ. ດັ່ງນັ້ນ ຄູ່ມືຄຳຖາມ ແລະ ຄຳຕອບສະບັບນີ້ມີເປົ້າໝາຍເພື່ອໃຫ້ຄຳອະທິບາຍແບບງ່າຍດາຍກ່ຽວກັບບາງທັດສະນະຫຼັກຂອງ ຄວາມທ່ຽງ ທຳໃນຂະແໜງປ່າມ້, ການປ່ຽນແປງຂອງດິນຟ້າອາກາດ ແລະ ກ່ຽວກັບແຜນງານ REDD+.

---

[1]REDD+ ນອກເໜືອຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມແລ້ວ ມັນຍັງລວມເອົາພາລະບົດບາດຂອງການອະນຸລັກ, ການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ເສີມຂະຫຍາຍການເກັບຮັກສາອາຍກາກບອນ ນຳອີກ

# ໂຄງຮ່າງຂອງຄູ່ມື

ຄູ່ມືດັ່ງກ່າວນີ້ປະກອບດ້ວຍຊຸດຄຳຖາມ ແລະ ຄຳຕອບສິບຂໍ້. ຄຳຖາມຕ່າງໆໄດ້ເຊື່ອມສານເຂົ້າໃນຈຸດປະສົງພື້ນຖານຂອງການແກ້ໄຂຄວາມຕ້ອງການການພັດທະນາຄວາມສາມາດ ຂອງຜູ້ອຳນວຍຄວາມສະດວກຢູ່ຂັ້ນຮາກຖານ; ເຊິ່ງເຂົາເຈົ້າໄດ້ແກ້ໄຂບາງຄຳຖາມພື້ນຖານກ່ຽວກັບຄວາມທ່ຽງທຳດ້ານສັງຄົມຢູ່ໃນຂະແໜງປ່າໄມ້ ແລະ ການປ່ຽນແປງຂອງດິນຟ້າອາກາດ, ແລະ ໃນຂະນະດຽວກັນນັ້ນກໍ່ໄດ້ຊຸກຍູ້ການເຂົ້າຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນທ້ອງຖິ່ນໃນການປັບປຸງຄວາມທ່ຽງທຳ, ການມີສ່ວນຮ່ວມ ແລະ ການເຂົ້າຮ່ວມ ຂອງສັງຄົມທີ່ພົວພັນເຖິງຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດ ແລະ ພົວພັນເຖິງແຜນງານ REDD+. ຄຳຖາມຕ່າງໆໄດ້ຖືກຈັດໄວ້ດັ່ງລຸ່ມນີ້:

**ພາກທີ 1 - ຄວາມເຂົ້າໃຈຂັ້ນພື້ນຖານ** ອະທິບາຍເຖິງແນວຄວາມຄິດຂອງຄວາມທ່ຽງທຳໃນ ສັງຄົມ, ອົງປະກອບຂອງແນວຄວາມຄິດ ແລະ ມັນມີຄວາມແຕກຕ່າງຈາກຄວາມສະເໝີພາບ, ໃນຂະແໜງ ປ່າໄມ້, ການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+ ແນວໃດ.

**ພາກທີ 2 - ຄວາມທ່ຽງທຳໃນຂະແໜງປ່າໄມ້, ການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+** ເນັ້ນໃສ່ການພັດທະນາການຄວາມທ່ຽງທຳໃນຂະແໜງປ່າໄມ້ໂດຍລວມ, ແລະ ເຫດຜົນຫຼັກຂອງການສົ່ງເສີມຄວາມທ່ຽງທຳໃນຂະແໜງປ່າໄມ້, ການປ່ຽນແປງຂອງດິນຟ້າ ອາກາດ ແລະ ແຜນງານ REDD+.

**ພາກທີ 3 - ເຄື່ອງມືດ້ານນະໂຍບາຍ ແລະ ສິ່ງທ້າທາຍຕ່າງໆທີ່ກ່ຽວຂ້ອງ** ອະທິບາຍເຄື່ອງມືດ້ານນະໂຍບາຍລະດັບສາກົນ ເພື່ອສົ່ງເສີມຄວາມທ່ຽງທຳໃນວຽກງານຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາ ກາດ ແລະ ແຜນງານ REDD+, ແລະ ສິ່ງທ້າທາຍຕ່າງໆທີ່ກ່ຽວຂ້ອງຢູ່ຂັ້ນຮາກຖານ.

**ພາກທີ 4 - ການພັດທະນາຄວາມສາມາດເພື່ອປັບປຸງຄວາມທ່ຽງທຳ** ເນັ້ນໃສ່ຄວາມຕ້ອງການໃນດ້ານຕ່າງໆ ແລະ ການພິຈາລະນາຫົວຂໍ້ຫຼັກ ເພື່ອພັດທະນາຄວາມສາມາດຢູ່ຂັ້ນຮາກຖານ ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມທ່ຽງທຳ. ພາກນີ້ຍັງເປັນການສົນທະນາກ່ຽວກັບມາດຖານຕົ້ນຕໍ ແລະ ຕົວຊີ້ ວັດຫຼັກສຳລັບການຕິດຕາມການເຊື່ອມສານ ແລະ ຜະລິດທີຜົນຂອງບັນດາຫຼັກການພື້ນຖານ ແລະ ຄຸນຄ່າຂອງຄວາມທ່ຽງທຳໃນດ້ານການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+; ຍິ່ງໄປກວ່ານັ້ນ, ພາກນີ້ຍັງໄດ້ເນັ້ນໃຫ້ເຫັນວິທີການເຮັດວຽກຂອງສອງໂຄງການພາກພື້ນ - ໂຄງການຂັ້ນຮາກຖານຂອງ REDD+ ແລະ ແຜນງານ GREEN Mekong - ທີ່ໄດ້ປະກອບສ່ວນເຂົ້າໃນການນຳໄປສູ່ການສົ່ງເສີມຄວາມທ່ຽງທຳໃນຂະແໜງປ່າໄມ້ ແລະ ການປ່ຽນແປງຂອງດິນຟ້າອາກາດ.

# ສິບຄຳຖາມຫັກ





## ພາກທີ 1: ຄວາມເຂົ້າໃຈຂັ້ນພື້ນຖານ ກ່ຽວກັບ ຄວາມທ່ຽງທຳ

**Q1** ຄວາມທ່ຽງທຳແມ່ນຫຍັງ ແລະ ມັນມີຄວາມແຕກຕ່າງກັບຄວາມສະເໝີພາບແນວໃດ?

**Q2** ອົງປະກອບຂອງຄວາມທ່ຽງທຳມີຫຍັງແດ່?

## ພາກທີ 2: ຄວາມທ່ຽງທຳໃນຂະແໜງປ່າໄມ້,ການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+

**Q3** ເຫດຜົນພື້ນຖານເພື່ອປັບປຸງຄວາມທ່ຽງທຳດ້ານການປ່ຽນແປງດິນຟ້າອາກາດໂດຍເນັ້ນໃສ່ປ່າໄມ້ແມ່ນຫຍັງ?

**Q4** ບັນຫາຕົ້ນຕໍຂອງຄວາມທ່ຽງທຳດ້ານການປ່ຽນແປງດິນຟ້າອາກາດໂດຍເນັ້ນໃສ່ປ່າໄມ້ມີຫຍັງແດ່?

**Q5** ການຂາດຄວາມທ່ຽງທຳເພີ່ມຄວາມດ້ອຍ ໂອກາດ ຕໍ່ຜູ້ທີ່ກ່ຽວຂ້ອງຢູ່ຂັ້ນຮາກຖານ ດ້ານການປ່ຽນແປງດິນຟ້າອາກາດໂດຍເນັ້ນໃສ່ປ່າໄມ້ແນວໃດແດ່?





## ພາກທີ 3: ເຄື່ອງມືດ້ານນະໂຍບາຍ ແລະ ສິ່ງທ້າທາຍ ຕ່າງໆ ທີ່ພົວພັນ ເຖິງການສົ່ງເສີມຄວາມທ່ຽງທຳເພື່ອຫຼຸດຜ່ອນ ການປ່ຽນແປງຂອງດິນຟ້າອາກາດໂດຍເນັ້ນໃສ່ປ່າໄມ້ຢູ່ຂັ້ນຮາກຖານ

**Q6** ເຄື່ອງມືດ້ານນະໂຍບາຍ ແລະກອບວຽກທີ່ມີຢູ່ອັນໃນລະດັບສາກົນ ໃດແດ່ທີ່ ສົ່ງເສີມຄວາມທ່ຽງທຳໃນຂະແໜງປ່າໄມ້, ຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+?

**Q7** ສິ່ງທ້າທາຍຫຼັກເພື່ອຮັບປະກັນຄວາມທ່ຽງທຳໃນການຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດໂດຍອີງໃສ່ປ່າໄມ້ຢູ່ຂັ້ນຮາກຖານມີຫຍັງແດ່?

## ພາກທີ 4: ການພັດທະນາຄວາມສາມາດ ເພື່ອປັບປຸງ ຄວາມທ່ຽງທຳ ຢູ່ຂັ້ນຮາກຖານ

**Q8** ພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງ ຜູ້ອຳນວຍຄວາມສະດວກຢູ່ຂັ້ນຮາກຖານ ໃນການປັບປຸງຄວາມທ່ຽງທຳໃນການຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດ ແລະ ຂອງ ແຜນງານ +ມີຫຍັງແດ່?

**Q9** ມາດຖານຕົ້ນຕໍ ແລະ ຕົວຊີ້ວັດຫຼັກສຳລັບການຕິດຕາມຄວາມທ່ຽງທຳໃນຂະແໜງປ່າໄມ້, ການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+  ມີຫຍັງແດ່?

**Q10** ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງໃນການປັບປຸງຄວາມທ່ຽງທຳໃນການຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດໂດຍອີງໃສ່ປ່າໄມ້ມີຫຍັງແດ່?



# ພາກທີ 1: ຄວາມເຂົ້າໃຈຂັ້ນພື້ນຖານ ກ່ຽວກັບ ຄວາມທ່ຽງທຳ

# Q1

## ຄວາມທ່ຽງທຳແມ່ນຫຍັງ ແລະ ມັນມີຄວາມແຕກຕ່າງກັບຄວາມສະເໝີພາບແນວໃດ?

ຄວາມທ່ຽງທຳເປັນການຮັບປະກັນວ່າທຸກຄົນມີໂອກາດ, ສິດທິ ແລະ ຊັບພະຍາກອນຕ່າງໆ ເພື່ອປະຕິບັດຄວາມມຸ່ງມາດປາດຖະໜາຂອງຕົນ. ມັນໄດ້ອີງໃສ່ແນວຄວາມຄິດທີ່ວ່າການດຳລົງຊີວິດ ຂອງຜູ້ຄົນຄວນຖືກກຳນົດຈາກການຕັດສິນໃຈຂອງເຂົາເຈົ້າເອງ, ບໍ່ແມ່ນມາຈາກເງື່ອນໄຂທີ່ບໍ່ເປັນທຳທີ່ເຂົາເຈົ້າບໍ່ສາມາດ ຄວບຄຸມໄດ້. ຄວາມທ່ຽງທຳຍັງໝາຍເຖິງການແບ່ງປັນຊັບພະຍາກອນທີ່ມີຢ່າງຈຳກັດ ໃນຮູບແບບ ທີ່ຮັບປະກັນວ່າແຕ່ລະຄົນໄດ້ຮັບການແບ່ງປັນຊັບພະຍາກອນເຫຼົ່ານັ້ນ ດ້ວຍຄວາມຍຸດຕິທຳ, ເຊິ່ງມັນມີຄວາມເປັນໄປໄດ້ ຖ້າຫາກວ່າຂະບວນການແບ່ງປັນເຫຼົ່ານັ້ນມີຄວາມຍຸດຕິທຳ ແລະ ຖືກຕ້ອງ.

ດັ່ງນັ້ນ,ຄວາມທ່ຽງທຳສາມາດນິຍາມໄດ້ວ່າແມ່ນຄວາມຍຸດຕິທຳຕໍ່ກັບພາກສ່ວນທີ່ກ່ຽວຂ້ອງທັງໝົດໃນຊ່ວງດຳເນີນຂັ້ນຕອນຕ່າງໆ ເພື່ອກຳນົດ ແລະ ຈັດຕັ້ງປະຕິບັດນະໂຍບາຍຕ່າງໆ, ແລະ ການແບ່ງປັນຊັບພະຍາກອນ ແລະ ງົບປະມານຕ່າງໆທີ່ພົວພັນເຖິງນະໂຍບາຍເຫຼົ່ານັ້ນ, ຕາມການຕົກລົງທີ່ກຳນົດ ໄວ້ໃນຫຼັກການ.

ຄວາມທ່ຽງໄດ້ເຊື່ອມໂຍງໃສ່ຫຼັກການຄວາມສະເໝີພາບ - ທີ່ວ່າທຸກຄົນມີສິດໃນການມີຊີວິດທີ່ເທົ່າທຽມກັນ. ຄວາມທ່ຽງທຳມັກມີຄວາມສັບສົນ ຫຼື ຖືກປ່ຽນແທນດ້ວຍຄຳວ່າສະເໝີພາບ, ແຕ່ວ່າທັງສອງຢ່າງແມ່ນບໍ່ຄືກັນ. ຄວາມສະເໝີພາບໝາຍຄວາມວ່າທຸກຄົນຕ້ອງໄດ້ຮັບການປະຕິບັດທີ່ເທົ່າທຽມກັນ,ໂດຍບໍ່ຄຳນຶງເຖິງທັດສະນະ, ສະຖານະພາບ ແລະ ຕຳແໜ່ງ. ເຖິງຢ່າງໃດກໍຕາມ, ການປະຕິບັດຕໍ່ບຸກຄົນອື່ນຢ່າງເທົ່າທຽມກັນອາດຈະ ບໍ່ແມ່ນສິ່ງຈຳເປັນທີ່ນຳໄປສູ່ຄວາມຍຸຕິທຳ ຫຼື ເປັນພຽງແຕ່ຜົນໄດ້ຮັບເທົ່ານັ້ນ. ຄວາມສະເໝີພາບາຈະສາມາດໄດ້ ຮັບໝາກຜົນຖ້າຫາກວ່າຜູ້ຄົນມີທັດສະນະອັນດຽວກັນ ແລະ ມີຄວາມຕ້ອງການອັນດຽວກັນ. ຄວາມທ່ຽງທຳ ເຂົ້າໃຈວ່າບໍ່ພຽງແຕ່ທຸກຄົນມີຈຸດເລີ່ມຕົ້ນທີ່ຄືກັນ ແລະ ບາງຄົນທີ່ອາດຈະມີຄວາມດ້ອຍ ໂອກາດທີ່ບໍ່ເປັນທຳ ຈາກປັດໃຈຕ່າງໆທີ່ຢູ່ນອກເໜືອການຄວບຄຸມໄດ້.

ເປົ້າໝາຍຂອງຄວາມທ່ຽງທຳແມ່ນເພື່ອກຳຈັດສະພາບຄວາມບໍ່ຍຸຕິທຳ ແລະ ສະຖານະການທີ່ບໍ່ສາມາດ ຫຼີກລ້ຽງໄດ້ທີ່ເປັນສິ່ງກີດຂວາງຜູ້ຄົນຈາກການໄປເຖິງທ່າແຮງບົ່ມຊ້ອນຂອງຕົນ. ວິທີການຂອງຄວາມທ່ຽງທຳ ສາມາດຊ່ວຍໃນການກຳນົດເຫດຜົນຕ່າງໆຂອງຄວາມແຕກຕ່າງທີ່ບໍ່ເປັນທຳຢູ່ໃນສະຖານະການຕ່າງໆຂອງຄົນ ແລະ ສ້າງໃຫ້ເກີດການປ່ຽນແປງເພື່ອແກ້ໄຂບັນຫາເຫຼົ່ານັ້ນໄດ້.

ໂດຍທົ່ວໄປແລ້ວຄວາມບໍ່ສະເໝີພາບແມ່ນມີສາຍເຫດມາຈາກການຈຳແນກຕໍ່ກຸ່ມຄົນໃດໜຶ່ງໃນສັງຄົມ; ການຈຳແນກສາມາດອີງຕາມເພດ, ເຜົ່າຊົນ, ສາສະໜາ ຫຼື ຄວາມເປັນພິການ. ການຈຳແນກທຸກຮູບແບບນຳໄປສູ່ການແຍກບຸກຄົນ ແລະ ກຸ່ມຄົນຕ່າງໆອອກຈາກການປະຕິບັດສິດທິຂອງເຂົາເຈົ້າຢ່າງເປັນອິດສະຫຼະ ເຊັ່ນ: ການສູນເສຍການເຂົ້າເຖິງຊັບພະຍາກອນຕ່າງໆທີ່ຄົນອື່ນໆສາມາດເຂົ້າເຖິງໄດ້. ຜູ້ຄົນຍັງປະເຊີນກັບ ຊັບພະຍາກອນຕ່າງໆທີ່ຄົນອື່ນໆສາມາດເຂົ້າເຖິງໄດ້. ຜູ້ຄົນຍັງປະເຊີນກັບ ຄວາມບໍ່ສະເໝີພາບຍ້ອນໂຄງສ້າງຄວາມທຸກຈົນ, ການດຳລົງຊີວິດຢູ່ເຂດໂດດດ່ຽວ, ຂາດການເຂົ້າເຖິງ ການ ບໍລິການ ຫຼື ຂໍ້ມູນຂ່າວສານໃນດ້ານຕ່າງໆ, ການສະພາບແວດລ້ອມເຊື່ອມໂຊມ ແລະ ໄພພິບັດທາງທຳມະຊາດ. ຄວາມບໍ່ສະເໝີພາບສາມາດເກີດຂຶ້ນໄດ້ໃນຫຼາຍລະດັບທີ່ແຕກຕ່າງກັນ, ຈາກລະຫວ່າງປະເທດຈົນເຖິງລະດັບ ຊຸມຊົນ.

# Q2

## ອົງປະກອບຂອງຄວາມທ່ຽງທໍາມີຫຍັງແດ່?

ຄວາມທ່ຽງທໍາມີສາມອົງປະກອບຫຼັກ - ການແບ່ງປັນ, ບາດກ້າວ ແລະ ຂະແໜງການ, ດັ່ງທີ່ໄດ້ອະທິບາຍລຸ່ມນີ້:

**ຄວາມທ່ຽງທໍາດ້ານການແບ່ງປັນ** ພົວພັນເຖິງຄວາມຍຸຕິທໍາໃນການແບ່ງປັນ ຫຼື ຈັດສັນຄ່າໃຊ້ຈ່າຍ, ການປະກອບສ່ວນໃນດ້ານຕ່າງໆ, ຄວາມສ່ຽງ ແລະ ຜົນປະໂຫຍດຂອງພາກສ່ວນທີ່ກ່ຽວຂ້ອງ, ເຊິ່ງເປັນຜົນມາຈາກການຕັດສິນໃຈດ້ານການຄຸ້ມຄອງນະໂຍບາຍ ຫຼື ຊັບພະຍາກອນຕ່າງໆ. ໂດຍທົ່ວໄປແລ້ວ ຄວາມທ່ຽງທໍາໃນການແບ່ງປັນ ເປັນຕົວແທນ ໃຫ້ ປະກອບ ດ້ານເສດຖະກິດ ຂອງຄວາມທ່ຽງທໍາ.

**ຄວາມທ່ຽງທໍາດ້ານບາດກ້າວ** ໝາຍເຖິງຄວາມເທົ່າທຽມ ໃນຂະບວນການທາງການເມືອງທີ່ອໍານວຍຄວາມສະດວກໃຫ້ ແກ່ການຕັດສິນໃຈ, ການຈັດສັນຊັບພະຍາກອນຕ່າງໆ ແລະ ການແກ້ໄຂຂໍ້ຂັດແຍ່ງ. ມັນພົວພັນເຖິງການເປັນຕົວແທນ, ການຮັບຮູ້/ການຍອມຮັບ, ການອອກສຽງ ແລະ ການມີສ່ວນຮ່ວມໃນຂະບວນການຕ່າງໆ. ຄວາມທ່ຽງທໍາດ້ານ ບາດກ້າວ ຍັງໝາຍເຖິງບາດກ້າວຕ່າງໆທີ່ຖືກນໍາໃຊ້ຢ່າງສະເໝີກັນເຊັ່ນ:ບໍ່ມີການສໍ້ລາດບັງຫຼວງ, ການຫຼິ້ນພັກຫຼິ້ນພວກ, ການສວາຍໃຊ້ໜ້າທີ່ ແລະ ອື່ນໆ.

**ຄວາມທ່ຽງທໍາດ້ານດ້ານສະພາຍການ** ເຊື່ອມໂຍງກັບອີກສອງອົງປະກອບຂອງຄວາມທ່ຽງທໍາໂດຍການ ພິຈາລະນາພາຍໃຕ້ເງື່ອນໄຂທາງການເມືອງ, ເສດຖະກິດ ແລະ ເງື່ອນໃຂທາງສັງຄົມ ອັນທີ່ມີຜູ້ຄົນເຂົ້າຮ່ວມ ໃນຂະບວນການນ ແລະ ການແບ່ງປັນ - ແລະ ອັນທີ່ ຈໍາກັດ ແລະ ບໍ່ເຮັດໃຫ້ເຂົາເຈົ້າບໍ່ສາມາດປະຕິບັດທັງສອງອົງປະກອບ ໄດ້. ຄວາມທ່ຽງທາດ້ານສະພາບການລວມຢູ່ໃນແນວຄວາມຄິດຂອງຄວາມສາມາດສ່ວນບຸກຄົນ (ເຊັ່ນ: ການຍອມຮັບດ້ານການສຶກສາ, ດ້ານການເມືອງ), ການເຂົ້າເຖິງ (ຊັບພະຍາກອນທໍາມະຊາດລວມທັງເງິນທຶນ, ແຮງງານ, ເຄືອຄ່າຍຕະຫຼາດ ແລະ ອື່ນໆ) ແລະ ດ້ານອໍານາດ (ເພື່ອໃຫ້ໄດ້ມາ ແລະ ຮັກສາການເຂົ້າເຖິງຊັບພະຍາກອນຕ່າງໆ).

ທັງສາມອົງປະກອບຂອງຄວາມທ່ຽງທໍາແມ່ນມີການເຊື່ອມໂຍງເຊິ່ງກັນ ແລະ ກັນ, ແລະ ດັ່ງນັ້ນ ການຂາດ ອົງປະກອບໃດໜຶ່ງໃນການສົ່ງເສີມຄວາມທ່ຽງທໍາ ຈະບໍ່ສາມາດສ້າງໝາກຜົນທີ່ເປັນຜົນໄດ້ຮັບ ທີ່ເປັນໜ້າເພິ່ງພໍໃຈໄດ້. ຍົກຕົວຢ່າງ, ຄວາມແຕກຕ່າງດ້ານຄວາມສາມາດ, ການເຂົ້າເຖິງ ແລະ ອໍານາດສາມາດສ້າງອິດທິພົນ ອັນສໍາຄັນໃຫ້ແກ່ຄວາມທ່ຽງທໍາດ້ານບາດກ້າວ ແລະ ດ້ານການແບ່ງປັນໄດ້. ເຊັ່ນດຽວກັນ, ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ, ໂດຍຮັບຮູ້ລ່ວງໜ້າດ ຈະບໍ່ສາມາດເຮັດໃຫ້ຊຸມຊົນຕ່າງໆປ້ອງກັນ ແລະ ໄດ້ຮັບຜົນປະໂຫຍດຂອງຕົນໃນສະຖານະການທີ່ເຂົາເຈົ້າຂາດຂໍ້ມູນຂ່າວສານ, ເວລາ ແລະ ປະສົບການ ໃນການມີສ່ວນຮ່ວມໄດ້ຢ່າງມີຜະສິດທິຜົນ.


Xayalath
Phonesavanh
Scotch Brand Tape



# ພາກທີ 2: ຄວາມທ່ຽງທຳໃນຂະແໜງປ່າໄມ້, ການປ່ຽນແປງ ຂອງດິນຟ້າອາກາດ ແລະ ແຜນງານ REDD+

# Q3

## ເຫດຜົນພື້ນຖານ ເພື່ອປັບປຸງຄວາມທ່ຽງທຳດ້ານການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດໂດຍເນັ້ນໃສ່ປ່າໄມ້ ນັ້ນແມ່ນຫຍັງ?

ຄວາມທ່ຽງທຳບໍ່ແມ່ນແນວຄວາມຄິດອັນໃໝ່ໃນການຖົກຖຽງດ້ານການພັດທະນາ, ລວມທັງຢູ່ໃນຂະແໜງປ່າໄມ້. ການຖົກຖຽງກ່ຽວກັບຫົວຂໍ້ທີ່ວ່າເປັນຫຍັງຈິ່ງຕ້ອງປັບປຸງຄວາມທ່ຽງທຳໃນຂະແໜງປ່າໄມ້ ແລະ ປັບປຸງແນວໃດໄດ້ຮັບການພັດທະນາຢ່າງເປັນລະບົບແນວໃດໃນໄລຍະທີ່ຜ່ານມາ. ໂດຍ ເລີ່ມຕົ້ນຈາກການຍອມຮັບຮູບແບບຕ່າງໆຂອງການຄຸ້ມຄອງປ່າໄມ້ແບບມີສ່ວນຮ່ວມ(ເຊັ່ນການຄຸ້ມຄອງ ປ່າໄມ້ໂດຍອີງໃສ່ຊຸມຊົນ, ການຄຸ້ມຄອງປ່າໄມ້ຊຸມຊົນ, ການຄຸ້ມຄອງປ່າໄມ້ແບບມີສ່ວນຮ່ວມ, ການຄຸ້ມຄອງ ປ່າໄມ້ຮ່ວມກັນ, ການຄຸ້ມຄອງປ່າໄມ້ໂດຍການຮ່ວມມືຂອງຫຼາຍພາກສ່ວນ, ການຄຸ້ມຄອງປ່າໄມ້ແບບມີ ສ່ວນຮ່ວມ, ປ່າໄມ້ໝູ່ບານ ແລະ ອື່ນໆ), ແຜນງານທີ່ເນັ້ນໃສ່ຄວາມທ່ຽງທຳໃນຂະແໜງປ່າໄມ້ ເຊິ່ງ ສ່ວນໃຫຍ່ຍັງມີຂໍ້ຈຳກັດດ້ານຄວາມຍຸຕິທຳ ແລະ ຄວາມຍຸຕິທຳທາງສັງຄົມດ້ານການແບ່ງປັນຜົນປະໂຫຍດ (ຄວາມທ່ຽງທຳດ້ານການແບ່ງປັນ). ເຖິງຢ່າງໃດກໍ່ຕາມ, ຈາກການປະກົດຕົວຂອງການຊຸກຍູ້ສິດທິ, ການຖົກ ຖຽງກ່ຽວກັບຄວາມທ່ຽງທຳໃນຂະແໜງປ່າໄມ້ໄດ້ກຳນົດຢູ່ໃນລະດັບຖັດໄປ. ຈຸດເນັ້ນໜັກໃນປັດຈຸບັນແມ່ນ ການພັດທະນາຄວາມສາມາດຂອງບຸກຄົນ ແລະ ຊຸມຊົນ ແລະ ການສົ່ງເສີມຄວາມເຂັ້ມແຂງ, ເພື່ອປັບປຸງ ການມີສ່ວນຮ່ວມຂອງເຂົາເຈົ້າໃນຂະບວນການຕັດສິນໃຈ (ຄວາມທ່ຽງທຳດ້ານບາດກ້າວ) ແລະ ສ້າງຄວາມເຂັ້ມແຂງດ້ານການເຂົ້າເຖິງຊັບພະຍາກອນຕ່າງໆ ແລະ ຄວາມເຂັ້ມແຂງໃນການຮັກສາຊັບພະຍາ ກອນເຫຼົ່ານັ້ນ (ຄວາມທ່ຽງທຳດ້ານບາດກ້າວ).

ດັ່ງນັ້ນ, ເຫດຜົນພື້ນຖານເພື່ອປັບປຸງຄວາມທ່ຽງທຳ ໃນຂະແໜງປ່າໄມ້ແມ່ນເພື່ອຮັບປະກັນການແບ່ງປັນ ຄວາມຮັບຜິດຊອບ, ຄ່າໃຊ້ຈ່າຍ ແລະ ຜົນປະໂຫຍດຢ່າງຍຸຕິທຳ ໃຫ້ແກ່ທຸກຄົນທີ່ອາໃສ ແລະ ມີສ່ວນຮ່ວມ ໃນການຄຸ້ມຄອງປ່າໄມ້; ວິທີການນີ້ຈະເປັນການສະໜອງຊັບພະຍາກອນ ແລະ ການບໍລິການຕ່າງໆໃນຮູບ ການທີ່ມີຄວາມຍືນຍົງ, ແລະ ຈະເຮັດໃຫ້ການດຳລົງຊີວິດມີຄວາມໝັ້ນຄົງກວ່າເກົ່າ. ເຖິງຢ່າງໃດກໍ່ຕາມ, ຜົນສຳເລັດດັ່ງກ່າວຈະເກີດຂຶ້ນໄດ້ຖ້າຫາກວ່າທັງສາມອົງປະກອບຂອງຄວາມທ່ຽງທຳນີ້ ຖືກນຳໃຊ້ໃນຮູບແບບ ທີ່ມີຄວາມກົມກຽວໃນການຄຸ້ມຄອງປ່າໄມ້. ການຂາດອົງປະກອບໃດໜຶ່ງຈະເຮັດໃຫ້ເກີດຄວາມລົ້ມເຫຼວ ທາງ ດ້ານຜົນໄດ້ຮັບໃນການສະໜອງລາຍຮັບຕ່ຳສຸດທີ່ເປັນສິ່ງຮັບປະກັນຄວາມໝັ້ນຄົງດ້ານການດຳລົງຊີວິດ. ຍິ່ງໄປກວ່ານັ້ນ, ຄວາມບໍ່ເທົ່າທຽມກັນຂອງບັນດາຜູ້ເຂົ້າຮ່ວມຫຼັກໃນການເຂົ້າເຖິງ ຫຼື ຄວບຄຸມການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້, ໄດ້ສົ່ງຜົນສະທ້ອນອັນສຳຄັນໃຫ້ແກ່ຄວາມທ່ຽງທຳ ດ້ານບາດກ້າວ ແລະ ການແບ່ງປັນ, ເຊິ່ງຜົນສະທ້ອນດັ່ງກ່າວໄດ້ນຳໄປສູ່ຄວາມບໍ່ສະເໝີພາບ. ບັນຫາດັ່ງກ່າວສາມາດ ຫຼຸດຜ່ອນໄດ້ ຫຼື ປ້ອງກັນໄດ້ດ້ວຍການກຳນົດເປົ້າໝາຍຊຸມຊົນທຸກຍາກ ແລະ ດ້ອຍໂອກາດຢ່າງຊັດເຈນ (ຄວາມ ທ່ຽງທຳດ້ານສະພາບການ) ແລະ ຊ່ວຍໃຫ້ເຂົາເຈົ້າໄດ້ເພີ່ມການແບ່ງປັນດ້ານຜົນປະໂຫຍດ (ຄວາມທ່ຽງທຳດ້ານການແບ່ງປັນ) ໂດຍການໄດ້ເຂົ້າຮ່ວມໃນຂະບວນການຕັດສິນໃຈ (ຄວາມທ່ຽງທຳດ້ານບາດກ້າວ), ດັ່ງທີ່ໄດ້ສະເໜີໃນກໍລະນີສຶກສາຈາກປະເທດເນປານ (ເບິ່ງຂໍ້ມູນທີ 1).

## ກໍລະນີ 1: ຄວາມທ່ຽງທຳດ້ານການແຈກຢາຍ, ດ້ານບາດກ້າວ ແລະ ຂະແໜງການ ຢູ່ໃນຂະແໜງປ່າໄມ້ຊຸມຊົນ

ປ່າໄມ້ຊຸມຊົນຢູ່ປະເທດເນປານ ໄດ້ສະແດງໃຫ້ເຫັນການເຊື່ອມໂຍງເຊິ່ງກັນ ແລະ ກັນລະຫວ່າງອົງປະກອບຂອງຄວາມທ່ຽງທຳດ້ານການແຈກຢາຍ, ດ້ານບາດກ້າວ ແລະ ດ້ານສະພາບການ.

ເມື່ອການຄຸ້ມຄອງປ່າໄມ້ຊຸມຊົນໄດ້ຮັບການເລີ່ມຕົ້ນຂຶ້ນໃນປີ 1970, ຈຸດປະສົງເບື້ອງຕົ້ນຂອງການສົ່ງເສີມປ່າໄມ້ ຊຸມຊົນແມ່ນເພື່ອຟື້ນຟູສະພາບປ່າໄມ້. ວິທີການດັ່ງກ່າວໄດ້ຮັບການປະຕິບັດ ໂດຍການຈຳກັດ ການການເກັບກູ້ຜະລິດຕະພັນເຄື່ອງປ່າຂອງດົງຂອງກຸ່ມຜູ້ນຳໃຊ້ປ່າຊຸມຊົນ (CFUGs) ຢ່າງເຂັ້ມງວດເພື່ອເຮັດໃຫ້ຜະລິດຕະພັນເຫຼົ່ານັ້ນສາມາດເກີດຂຶ້ນໃໝ່ໄດ້. ເຖິງຢ່າງໃດກໍ່ຕາມ, ຄວາມເຂັ້ມງວດຂອງການເກັບກູ້ຜະລິດຕະພັນເຄື່ອງປ່າຂອງດົງ ໄດ້ສົ່ງຜົນເຮັດໃຫ້ລາຍຮັບຈາກປ່າໄມ້ຫຼຸດລົງ ແລະ ຜົນກະທົບດັ່ງກ່າວໄດ້ເຮັດໃຫ້ຜູ້ທີ່ອາໃສ ຫຼື ອີງໃສ່ການເກັບຜະລິດຕະພັນເຄື່ອງປ່າຂອງດົງ ພຽງຢ່າງດຽວນັ້ນ ກາຍເປັນຜູ້ໄດ້ຮັບຜົນກະທົບຫຼາຍທີ່ສຸດ ຍ້ອນວ່າ ເຂົາເຈົ້າບໍ່ມີປ່າຊົມໃຊ້ເປັນຂອງຕົນເອງ ຫຼື ມີແຕ່ໜ້ອຍດຽວ. ໃນບໍ່ດົນມາ ນີ້, ການປັນຜົນປະໂຫຍດ ແລະ ກຳໄລ (ຜະລິດຕະພັນເຄື່ອງປ່າຂອງດົງ ແລະ ລາຍຮັບຕ່າງໆ) ໄດ້ກາຍເປັນບັນຫາສຳຄັນທີ່ນັບມື້ເພີ່ມຂຶ້ນ, ແລະ ການປັບປຸງສະພາບການດຳລົງຊີວິດໄດ້ກາຍມາເປັນເປົ້າໝາຍເພີ່ມເຕີມ ຂອງວຽກງານປ່າໄມ້ຊຸມຊົນ, ເຊິ່ງນອກເໜືອຈາກການຟື້ນຟູສະພາບປ່າໄມ້. ໃນປີ 2009, ຄູ່ມືການນຳໃຊ້ ປ່າໄມ້ ຊຸມຊົນໄດ້ແນະນຳວ່າ ການເກັບກູ້ຜະລິດຕະພັນເຄື່ອງປ່າຂອງດົງຕ້ອງໄດ້ນຳໃຊ້ລາຍຮັບຂອງຕົນ ເປັນຈຳນວນ 35% ຂອງລາຍຮັບ ເຂົ້າໃນກິດຈະກຳລຸດຜ່ອນຄວາມທຸກຈົນ, ເຊິ່ງໄດ້ກາຍມາເປັນທີ່ຍອມຮັບໃນຫົວຂໍ້ຄວາມທ່ຽງ ທຳ. ໃນຫຼາຍກໍລະນີ ກົດລະບຽບຕ່າງໆໄດ້ຖືກນຳໃຊ້ ຢ່າງສະເໝີພາບ ແຕ່ຍ້ອນວ່າຍັງມີບາງຄົນທີ່ບໍ່ ສາມາດ ປະຕິບັດໄດ້ຕາມເງື່ອນໄຂເຫຼົ່ານັ້ນ ຫຼື ບໍ່ມີຄວາມຈຳເປັນ, ຫຼື ບໍ່ມີເວລາໃນການເກັບເຄື່ອງປ່າຂອງດົງ ແລະ ອື່ນໆ ດັ່ງນັ້ນ ຈິ່ງເຮັດ ໃຫ້ພວກເຂົາບໍ່ໄດ້ຮັບຜົນປະໂຫຍດຢ່າງທ່ຽງທຳ. ສຳລັບຄອບຄົວທີ່ທຸກຈົນກວ່າ, ຍົກຕົວຢ່າງ: ສ່ວນໃຫຍ່ຈະບໍ່ສາມາດເຂົ້າເຖິງ ແລະ ບໍ່ມີເຄື່ອງມືສຳລັບເກັບເຄື່ອງປ່າຂອງດົງ, ຂາດການຂົນສົ່ງ ຫຼື ນຳໃຊ້ການແບ່ງປັນໄມ້ທ່ອນ ຂອງ ເຂົາເຈົ້າ. ເພື່ອແກ້ໄຂບັນຫາຄວາມທ່ຽງທຳດ້ານຂະແໜງການນີ້ ມີກຸ່ມຜູ້ນຳໃຊ້ປ່າຊຸມຊົນ ບາງກຸ່ມໄດ້ເລີ່ມຂາຍໄມ້ ທ່ອນໃນນາມຂອງຊຸມຊົນ ແລະ ໄດ້ແບ່ງປັນລາຍຮັບຈາກການຂາຍໄມ້ເຫຼົ່ານັ້ນໃຫ້ແກ່ສະມາຊິກ, ໃນຂະນະດຽວກັນ ມີ ກຸ່ມອື່ນໆອີກໄດ້ປ່ຽນແຜນການຄຸ້ມຄອງຂອງຕົນ ໄປສູ່ການສະໜອງສິນຄ້າທີ່ມີຄວາມຈຳເປັນ ສຳລັບຜູ້ທຸກຍາກເຊັ່ນ: ໄມ້ຟືນທີ່ເປັນເຊື້ອໄຟ ແລະ ຜະລິດຕະພັນເຄື່ອງປ່າຂອງດົງອື່ນໆ.

ອີກໜຶ່ງຕົວຢ່າງຂອງອົງປະກອບດ້ານຂະແໜງການແມ່ນບາງຄັ້ງຄອບຄົວທີ່ທຸກຈົນທີ່ສຸດອາດຈະບໍ່ສາມາດນຳ ໃຊ້ຜົນປະໂຫຍດລະດັບຊຸມຊົນໄດ້ເຊັ່ນ: ການເຂົ້າໂຮງຮຽນ ຍ້ອນບໍ່ສາມາດຈ່າຍຄ່າຮຽນ ແລະ ເຄື່ອງແບບໄດ້. ການຂາດຄວາມສາມາດດັ່ງກ່າວໄດ້ເຮັດໃຫ້ຜູ້ເກັບຜະລິດຕະພັນເຄື່ອງປ່າຂອງດົງບາງກຸ່ມປ່ຽນວິທີການແຈກ ຢາຍຂອງຕົນໄປສູ່ການສະໜອງທຶນການສຶກສາ ແລະ ເຄື່ອງແບບການຮຽນໃຫ້ແກ່ລູກຂອງຄອບຄົວທຸກຍາກ ເຫຼົ່ານັ້ນ.

ຍ້ອນເຫດນັ້ນເອງ,ຜູ້ໃຫ້ທຶນຈາກຫຼາຍໂຄງການໄດ້ເນັ້ນວິທີການເຮັດວຽກໃສ່ ການປັບປຸງຄວາມທ່ຽງທຳດ້ານການແຈກຢາຍໃຫ້ໄດ້ຮັບຜົນສຳເລັດກວ່າເກົ່າ, ເພື່ອຫຼຸດຜ່ອນຄວາມບໍ່ສະເໝີພາບໃນຂະແໜງການ ແລະ ປັບປຸງຄວາມທ່ຽງທຳດ້ານບາດກ້າວການຢູ່ໃນກຸ່ມຜູ້ເກັບຜະລິດຕະພັນເຄື່ອງປ່າຂອງດົງ. ວິທີການນີ້ເລີ່ມຕົ້ນຈາກການ ກຳນົດເງື່ອນໄຂຕ່າງໆທີ່ແມ່ຍິງ ແລະ ກຸ່ມຜູ້ດ້ອຍໂອກາດເຊິ່ງເປັນກຸ່ມຄົນສ່ວນໃຫຍ່ - ຊົນຊັ້ນຕໍ່າ (ບໍ່ຖືກຍອມຮັບຈາກສັງຄົມ) - ຄວນໄດ້ເຂົ້າຮ່ວມເປັນຄະນະກຳມະການກຸ່ມຜູ້ເກັບຜະລິດຕະພັນເຄື່ອງປ່າຂອງດົງ ແລະ ຢ່າໜ້ອຍຕ້ອງໄດ້ຢູ່ໃນຕຳແໜ່ງຜູ້ຕັດສິນໃຈຫຼັກຂອງກຸ່ມ. ນອກຈາກນັ້ນ, ຕ້ອງມັ້ນໜັກຢ່າງເຂັ້ມງວດໃສ່ການຄຸ້ມຄອງທີ່ດີ (ລວມທັງ ການກຳນົດສະມາຊິກຊຸມຊົນຜູ້ດ້ອຍໂອກາດ ແລະ ທຸກຈົນ, ລວມທັງແມ່ຍິງ, ດ້ວຍວິທີຈັດລຳດັບຄວາມຮັ່ງມີ, ແລະ ການກວດສອບຂອງລັດ) ທີ່ນຳໄປສູ່ຂະບວນການຕັດສິນໃຈທີ່ສາມາດແກ້ໄຂບັນຫາຄວາມຈຳເປັນໂດຍກົງຂອງກຸ່ມຜູ້ດ້ອຍໂອກາດໄດ້ຫຼາຍກວ່າເກົ່າ.

ຂໍ້ມູນໄດ້ຈາກ: McDermott M.H. ແລະ Schreckenberg K., 2009. ຄວາມທ່ຽງທຳໃນການຄຸ້ມຄອງ ປ່າໄມ້ຊຸມຊົນ: ຂໍ້ມູນລະອຽດຈາກພາກເໜືອ ແລະ ພາກໃຕ້. ຮິມໂຮມໂດຍອົງກອນປ່າໄມ້ສາກົນ, 11(2), pp. 157-170.

# Q4

## ບັນຫາຕົ້ນຕໍຂອງຄວາມທ່ຽງທໍາໃນການຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດໂດຍເນັ້ນໃສ່ປ່າໄມ້ມີຫຍັງແດ່?

ໂດຍທົ່ວໄປແລ້ວ, ຫຼັກການພື້ນຖານ ແລະ ຄຸນຄ່າຂອງການປັບປຸງຄວາມທ່ຽງທໍາໃນຂະແໜງປ່າໄມ້ແມ່ນ ມີການກ່ຽວພັນ ແລະ ສາມາດນໍາໃຊ້ຢູ່ໃນແຜນງານ REDD+ ໄດ້ເຊັ່ນກັນ. ທັງສາມອົງປະກອບຂອງ ຄວາມ ທ່ຽງທໍາແມ່ນມີຄວາມສໍາຄັນຕໍ່ຜົນສໍາເລັດຂອງແຜນງານ REDD+, ດັ່ງທີ່ໄດ້ສະແດງຢູ່ໃນສັນຍາກັນການ[2]. ສັນຍາ ດັ່ງກ່າວເນັ້ນວ່າຄວາມທ່ຽງທໍາແມ່ນມີຄວາມຈໍາເປັນໃນການຮັບປະກັນທັງດ້ານຄວາມຖືກຕ້ອງຂອງ ລະບຽບກົດໝາຍ ແລະ ຜະສິດທິຜົນຂອງແຜນງານ REDD+, ໃນການແບ່ງປັນກໍາໄລ ແລະ ຜົນປະໂຫຍດ, ການມີສ່ວນຮ່ວມຢ່າງເທົ່າທຽມກັນໃນການຕັດສິນໃຈ ແລະ ເຂົ້າເຖິງຜົນປະໂຫຍດທີ່ພົວພັນເຖິງກາກບອນ ແລະ ບໍ່ແມ່ນກາກບອນ (Chhatre et al., 2012[3] ; McDermott et al., 2012[4] ).

ການສົນທະນາ ກ່ຽວກັບ ຄວາມທ່ຽງທໍາຂອງແຜນງານ REDD+ ສ່ວນໃຫຍ່ແມ່ນເນັ້ນໃສ່ຄວາມທ່ຽງທໍາ ລະດັບສາກົນ, ເຊິ່ງມັນມີຄວາມແຕກຕ່າງຈາກຄວາມທ່ຽງທໍາລະດັບຊາດ ຫຼື ລະດັບທ້ອງຖິ່ນ. ຄວາມທ່ຽງທໍາ ລະດັບສາກົນຢູ່ໃນແຜນງານ REDD+ ແມ່ນເນັ້ນໃສ່ການກ່າວເຖິງຄວາມຮັບຜິດຊອບ ຂອງປະເທດທີ່ພັດທະນາແລ້ວ (ປະເທດອຸດສາຫະກໍາ) ທີ່ປ່ອຍອາຍພິດເຮືອນແກ້ວ ແລະ ພັນທະຂອງເຂົາເຈົ້າໃນການໃຫ້ການສະໜັບສະໜູນດ້ານການເງິນເພື່ອຊ່ວຍເຫຼືອ (ປະເທດທີ່ປ່າໄມ້ຖືກຕັດ) ປະເທດຕ່າງໆໃຫ້ບັນລຸຜົນສໍາເລັດ ໃນການ ຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ. ເຖິງຢ່າງໃດກໍ່ຕາມ, ໃນຂະນະທີ່ຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບ ແຜນງານ REDD+ ກໍາລັງໄດ້ຮັບການຂະຫຍາຍໂຕ, ບັນຫາຕ່າງໆທີ່ພົວພັນເຖິງຄວາມທ່ຽງທໍາ ຂອງແຜນງານ REDD+ ກໍາລັງໄດ້ຮັບການສົນທະນາຢູ່ໃນຫຼາຍລະດັບ. (ເບິ່ງຂໍ້ມູນທີ 2).

ກ່ຽວກັບ ບັນຫາຄວາມທ່ຽງທໍາຢູ່ຂັ້ນຮາກຖານຂອງແຜນງານ REDD+, ຄວາມທ່ຽງທໍາເຫຼົ່ານັ້ນບໍ່ມີຄວາມແຕກຕ່າງກັນຫຼາຍປານໃດ ແລະ ບັນຫາສ່ວນໃຫຍ່ແມ່ນມາຈາກ ບັນຫາຄວາມທ່ຽງທໍາ ທີ່ມີຢູ່ໃນຂະແໜງປ່າໄມ້ໃນປັດຈຸບັນ. ສະຖານະພາບການຄຸ້ມຄອງທີ່ດິນປ່າໄມ້ທີ່ບໍ່ຊັດເຈນ; ໂຄງສ້າງການຄຸ້ມຄອງຢູ່ລະດັບທ້ອງຖິ່ນທີ່ບໍ່ເຂັ້ມແຂງ; ຊົນຊັ້ນຮັ່ງມີຄວບຄຸມການເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນປ່າໄມ້; ແລະ ຂາດການເຂົ້າຮ່ວມໃນຂະບວນການຕັດສິນໃຈ ຂອງກຸ່ມຜູ້ດ້ອຍໂອກາດລວມທັງກຸ່ມແມ່ຍິງ ແລະ ຊົນເຜົ່າ; ສິ່ງເຫຼົ່ານີ້ ເປັນ ພຽງບາງບັນຫາຂອງການກໍານົດຄວາມເປັນເຈົ້າຂອງ ແລະ ການແບ່ງປັນຜົນປະໂຫຍດຈາກກາກບອນ ແລະ ບໍ່ແມ່ນກາກບອນຂອງແຜນງານ REDD+. ຍິ່ງໄປກວ່ານັ້ນ, ຕົວຂັບເຄື່ອນຂອງການທໍາລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ, ທີ່ມີຄວາມຫຼາກຫຼາຍ, ໃນຮູບແບບທົ່ວໄປ ແລະ ສະເພາະ ແມ່ນນອນຢູ່ນອກຂະແໜງປ່າໄມ້, ຍັງອາດຈະເປັນການເພີ່ມບັນຫາໃຫ້ແກ່ຄວາມທ່ຽງທໍາຢູ່ໃນ ແຜນງານ

---

[2]ຜົນໄດ້ຮັບຈາກກອງປະຊຸມຂອງອົງການສະຫະປະຊາຊາດກ່ຽວກັບການປ່ຽນແປງດິນຟ້າອາກາດທີ່ຈັດຂຶ້ນຢູ່ນະຄອນ ກັນການ, ແມັກຊິໂກໃນລະຫວ່າງວັນທີ 29 ພະຈິກເຖິງ 10 ທັນວາ 2010

[3]Chhatre, A., Lakhanpal, S., Larson, A. M., Nelson, F.,Ojha, H. and Rao, J., 2012. ການປ້ອງກັນທາງກັນສັງຄົມ ແລະ ການມີ ຜົນປະໂຫຍດຮ່ວມກັນ ຂອງແຜນງານ REDD+: ການທົບທວນຄວາມເປັນໄປໄດ້ຂອງບັນຫາອ້ອມຂ້າງ. ຄໍາຄິດເຫັນດ້ານຄວາມຍືນຍົງຂອງສະພາບ ແວດລ້ອມໃນປັດຈຸບັນ ສາມາດເບິ່ງໄດ້ທີ່: at: http://dx.doi.org/10.1016/j.cosust.2012.08.006

[4]ການປະຕິບັດວຽກງານປ້ອງກັນທາງສັງຄົມຂອງແຜນງານ REDD+: ຜູ້ເຂົ້າຮ່ວມ, ຜົນປະໂຫຍດ ແລະ ແນວຄວາມຄິດ. ວິທະຍາສາດສິ່ງແວດລ້ອມ&ນະໂຍບາຍ 21, ໜ້າ 63-72.ສາມາດເບິ່ງໄດ້ທີ່ :at:http://dx.doi.org/10.1016/j.envsci.2012.02.007 REDD+. ດັ່ງທີ່ໄດ້ສົນທະນາຢູ່ໃນແຜນງານ REDD+,



ມັນກໍາລັງພັດທະນາໄດ້ຮັບການປັບປຸງໃຫ້ກາຍເປັນຫຼາຍລະດັບ, ຫຼາຍຈຸດປະສົງ, ຫຼາຍກົນໄກ ຫຼາຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງໄດ້ມີການເພີ່ມບັນຫາອັນໃໝ່ໃຫ້ແກ່ການຕັດສິນໃຈ ແລະ ຄວາມສົນໃຈ ແລະ ຄວາມຮຽກຮ້ອງ ເຊິ່ງຈະສົ່ງຜົນກະທົບໂດຍກົງໃຫ້ແກ່ບັນຫາຄວາມທ່ຽງທໍາ.

### ກອບຂໍ້ມູນທີ 2: ການສົນທະນາລະດັບສາກົນ ກ່ຽວກັບບັນຫາຄວາມທ່ຽງທໍາຢູ່ໃນ ແຜນງານ REDD+

ການສຶກສາແບບສົມທຽບ ກ່ຽວກັບ ການສົນທະນາດ້ານນະໂຍບາຍ ກ່ຽວກັບ ບັນຫາຄວາມທ່ຽງທໍາທີ່ພົວພັນເຖິງແຜນງານ REDD+ ໃນຂະແໜງສື່ມວນຊົນ Di Gregorio et al. (2013) ໄດ້ສັງເກດເຫັນວ່າພາກສ່ວນທີ່ກ່ຽວຂ້ອງລະດັບຊາດ ຢູ່ ປະເທດອິນໂດເນເຊຍ ແລະ ບຣາຊິນ ໄດ້ສົນທະນາເຖິງຄວາມເປັນໄປໄດ້ຂອງການແບ່ງປັນຄວາມຮັບຜິດຊອບ ໃນການຫຼຸດຜ່ອນ ການປ່ອຍອາຍພິດເຮືອນແກ້ວ ທີ່ນັບມື້ຮຸນແຮງຂຶ້ນ ແລະ ຄວາມຮັບຜິດຊອບດ້ານການເງິນຂອງແຜນງານ REDD+ (ຄວາມທ່ຽງທໍາດ້ານ ການແບ່ງປັນ) ຢູ່ທັງປະເທດທີ່ພັດທະນາແລ້ວ ແລະ ປະເທດດ້ອຍພັດທະນາ; ຈາກຜົນໄດ້ຮັບດັ່ງກ່າວ, ເຂົາເຈົ້າໄດ້ກໍານົດ ຫົວຂໍ້ການສົນທະນາຂອງເຂົາເຈົ້າໃຫ້ກາຍເປັນຄວາມທ່ຽງທໍາລະດັບສາກົນ. ແຕ່ແຕ່ໃນກົງກັນຂ້າມ, ຢູ່ຟີລິບປິນ, ຜູ້ເຂົ້າຮ່ວມຈາກ CSO ແຫ່ງຊາດໄດ້ມີຄວາມກັງວົນຍິ່ງກວ່າເກົ່າ ກ່ຽວກັບການແບ່ງປັນຜົນປະໂຫຍດ ແລະ ງົບປະມານຂອງແຜນງານ REDD+ ຢູ່ໃນປະເທດ. ເຊັ່ນດຽວກັນ, ຜູ້ເຂົ້າຮ່ວມລະດັບຊາດຢູ່ຫວຽດນາມກໍ່ໄດ້ກໍານົດຫົວຂໍ້ການສົນທະນາຂອງຕົນກ່ຽວກັບ ຄວາມທ່ຽງທໍາຢູ່ໃນແຜນງານ REDD+ ໃນລະດັບຮາກຖານ ແລະ ໄດ້ເຊື່ອມໂຍງຫົວຂໍ້ເຫຼົ່ານັ້ນເຂົ້າໃສ່ບັນຫາການດໍາລົງຊີວິດ ຂອງ ຜູ້ທີ່ກ່ຽວຂ້ອງໃນລະດັບຮາກຖານ. ຜູ້ເຂົ້າຮ່ວມຂອງ CSO ແຫ່ງຊາດໄດ້ສະແດງຄວາມເປັນຫວ່ງກ່ຽວກັບບັນຫາ ຄວາມທ່ຽງ ທໍາທີ່ເຊື່ອມໂຍງກັບການການຄຸ້ມຄອງສິດທີ່ດິນ ແລະ ສິດຄຸ້ມຄອງຂອງຜູ້ຄົນຊົນເຜົ່າ; ພວກເຂົາເຈົ້າໄດ້ ຮຽກຮ້ອງເຖິງ ການຍອມຮັບສິດທິຂອງຜູ້ຄົນທ້ອງຖິ່ນ, ໄປຄຽງຄູ່ກັບຄວາມຕ້ອງການໃຫ້ການມີສ່ວນຮ່ວມ ຂອງຊຸມຊົນທ້ອງຖິ່ນເພີ່ມຂຶ້ນ ໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນງານ REDD+.

ແຫຼ່ງຂໍ້ມູນ: Di Gregorio, M., Brockaus, M., Cronin, T., Muharrom, E., Santoso, L., Mardian, S ແລະ Büdenbender, M. 2013. ຄວາມທ່ຽງທໍາ ແລະ ແຜນງານ REDD+ ໃນຂະແໜງສື່ມວນຊົນ: ການວິເຄາະປຽບທຽບຂອງ ການສົນທະນາດ້ານນະໂຍບາຍ. ນິເວດວິທະຍາ ແລະ ສັງຄົມ, 18(2).

# Q5

## ການຂາດຄວາມທ່ຽງທຳ ມັນເພີ່ມການດ້ອຍໂອກາດໃຫ້ແກ່ຜູ້ທີ່ກ່ຽວຂ້ອງ ຂັ້ນຮາກຖານ ກ່ຽວກັບການປ່ຽນແປງດິນຟ້າອາກາດໂດຍເນັ້ນໃສ່ປ່າໄມ້ ແນວ ໃດແດ່?

ມີຫຼາຍອົງກອນ ແລະ ອົງການຈັດຕັ້ງຂອງລັດທີ່ເຂົ້າຮ່ວມໃນແຜນງານ REDD+ ມີຄວາມຮູ້ສຶກວ່າກົນໄກ ດັ່ງກ່າວນີ້ມີທ່າແຮງໃນການສ້າງຜົນປະໂຫຍດໃຫ້ແກ່ຊຸມຊົນທ້ອງຖິ່ນ ດ້ວຍຫຼາຍຮູບແບບ, ທີ່ນອກເໜືອຈາກ ພາລະໜ້າທີ່ພື້ນຖານໃນການຫຼຸດຜ່ອນການປ່ອຍອາຍແກັດເຮືອນແກ້ວ ແລະ ຫຼຸດຜ່ອນຜົນກະທົບຈາກ ການປ່ຽນແປງຂອງດິນຟ້າອາກາດ.

ແຜນງານ REDD+ ຍັງຖືກເບິ່ງເຫັນທີ່ເປັນກົນໄກອັນໜຶ່ງເຊິ່ງ, ຖ້າຫາກວ່າໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ, ຈະສາມາດຊ່ວຍໃນການປັບປຸງຄວາມທ່ຽງທຳໃນການຄຸ້ມຄອງຂະແໜງປ່າໄມ້ທັງໃນ ລະດັບຊາດ ແລະ ລະດັບທ້ອງຖິ່ນ. ໃນທາງກົງກັນຂ້າມ, ຖ້າຫາກຂາດ ຫຼື ມີຂໍ້ຈຳກັດໃນການພິຈາລະນາເຖິງອົງປະກອບຫຼັກຂອງຄວາມທ່ຽງທຳໃນການຈັດຕັ້ງປະຕິບັດແຜນງານ REDD+ ແລ້ວ ຈະເຮັດໃຫ້ໂອກາດປະສົບຜົນສຳເລັດຫຼຸດລົງ ແລະ ທັງເປັນການເຮັດໃຫ້ຜູ້ທຸກຍາກ ແລະ ຊຸມຊົນຜູ້ດ້ອຍໂອກາດເຫີນຫ່າງອອກໄປອີກ. ຖ້າຫາກວ່າບໍ່ມີຜູ້ຕາງໜ້າທີ່ສະຫຼາດຫຼັກແຫຼມ ຫຼື ມີສ່ວນຮ່ວມຢ່າງຫ້າວຫັນຂອງພາກສ່ວນທີ່ກ່ຽວຂ້ອງທັງ ໝົດ ກຸ່ມຊົນຊັ້ນຮັ່ງມີ ແລະ ມີອຳນາດແມ່ນມີຄວາມເປັນໄປໄດ້ສູງກວ່າທີ່ຈະຄວບຄຸມທີ່ດິນປ່າໄມ້ ແລະ ຊັບພະຍາກອນອື່ນໆລວມທັງທ່າແຮງໃນການສ້າງຜົນປະໂຫຍດຈາກແຜນງານ REDD+. ສະພາບການເຫຼົ່ານັ້ນຈະເຮັດໃຫ້ຄວາມດ້ອຍໂອກາດ ແລະ ຄວາມທຸກຈົນຂອງຊຸມຊົນໃດໜຶ່ງຍິ່ງສູງຂຶ້ນ ເລື້ອຍໆ; ແມ່ຍິງທີ່ດ້ອຍຖອກາດ, ກຸ່ມຊົນເຜົ່າ ແລະ ຄອບຄົວທີ່ບໍ່ມີທີ່ດິນແມ່ນກຸ່ມທີ່ມີຄວາມເປັນໄປໄດ້ສູງ ທີ່ຈະມີຄວາມທຸກຈົນຍິ່ງກວ່າເກົ່າ ຖ້າຫາກວ່າພວກເຂົາເຈົ້າບໍ່ໄດ້ ເຂົ້າຮ່ວມໃນຂະບວນ ການຕັດສິນໃຈ. ການເຂົ້າຮ່ວມຢ່າງພຽງພໍ ແລະ ການມີສ່ວນຮ່ວມຢ່າງຫ້າວຫັນເປັນສິ່ງສຳຄັນທີ່ສຸດໃນແງ່ຂອງການຖືກຈຳແນກທີ່ຍັງຄົງມີຢູ່ ຕໍ່ກັບຄວາມເປັນເຈົ້າຂອງທີ່ດິນ ແລະ ສິດນຳໃຊ້ທີ່ດິນຂອງກຸ່ມຄົນດັ່ງກ່າວ. ຍິ່ງໄປກວ່ານັ້ນ, ການຂາດການເຂົ້າເຖິງຊັບພະຍາກອນປ່າໄມ້, ຂາດຂໍ້ມູນຂ່າວສານ, ກົນໄກການຕະຫຼາດ ແລະ ສິນເສື່ອການເງິນສຳລັບກຸ່ມຄົນເຫຼົ່ານັ້ນ, ລວມທັງການຂາດທັກສະໃນດ້ານຕ່າງໆໃນການສະແດງຄວາມ ຄິດເຫັນຂອງຕົນຕໍ່ກັບບັນຫາທີ່ກ່ຽວຂ້ອງຢູ່ໃນຂະບວນການຕັດສິນໃຈໄດ້ຢ່າງມີຜະລິດທິຜົນ ເປັນການເພີ່ມ ການດ້ອຍໂອກາດໃຫ້ແກ່ເຂົາເຈົ້າ.

ຫຼືເວົ້າອີກຢ່າງໜຶ່ງວ່າ, ຖ້າຫາກວ່າອົງປະກອບພື້ນຖານຂອງຄວາມທ່ຽງທຳ (ການແບ່ງປັນ, ບາດກ້າວ ແລະ ຕາມສະພາບການ) ບໍ່ໄດ້ຮັບການເຊື່ອມສານເຂົ້າໃນຂະບວນການຕັດສິນໃຈ ກ່ຽວກັບ ບັນຫາປ່າໄມ້, ການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+ ແລ້ວ, ຄວາມດ້ອຍໂອກາດ ຂອງຊຸມຊົນຂັ້ນຮາກຖານແມ່ນຍິ່ງຈະເພີ່ມ ຂຶ້ນກວ່າເກົ່າ.




# ພາກທີ 3: ເຄື່ອງມືດ້ານນະໂຍບາຍ ແລະ ສິ່ງທ້າທາຍຕ່າງໆ ທີ່ພົວພັນເຖິງການສົ່ງເສີມຄວາມທ່ຽງທຳ ເພື່ອຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດໂດຍເນັ້ນໃສ່ປ່າໄມ້ຢູ່ຂັ້ນຮາກຖານ

# Q6

## ເຄື່ອງມືດ້ານນະໂຍບາຍ ແລະ ກອບວຽກລະດັບສາກົນອັນໃດ ທີ່ມີຢູ່ໃນລະດັບສາກົນ ເພື່ອສົ່ງເສີມຄວາມທ່ຽງທຳໃນຂະແໜງປ່າໄມ້, ຫຼຸດຜ່ອນການປ່ຽນແປງ ຂອງ ດິນຟ້າອາກາດ ແລະ ແຜນງານ REDD+?

ຄວາມທ່ຽງທຳສາມາດນຳໃຊ້ໄດ້ກັບທຸກຊຸມຊົນ ແລະ ທຸກປະເທດ ແລະ ທຸດຍຸກຄົນ. ແນວຄວາມຄິດຂອງ ຄວາມທ່ຽງທຳແມ່ນໄດ້ປະສົມປະສານເຂົ້າໃນກົດໝາຍສາກົນເປັນຢ່າງດີ. ສົນທິສັນຍາສາກົນວ່າດ້ວຍສິດທິ ມະນຸດໄດ້ກຳນົດໄວ້ວ່າການຮັບຮູ້ກຽດສັກສີທີ່ມີຢູ່ ແລະ ຄວາມສະເໝີພາບ ແລະ ສິດທິເທົ່າ ທຽມກັນຂອງສະມາຊິກທຸກຄົນຂອງຄອບຄົວເປັນພື້ນຖານຂອງອິດສະຫຼະພາບ, ຄວາມຍຸຕິທຳ ແລະ ສັນຕິ ພາບໃນໂລກ (Weiss, 1990)[5].

ຈາກເອກະສານອ້າງອີງສະເພາະຂອງແຜນງານ REDD+, ກອງປະຊຸມຄັ້ງທີ 15 (COP 15) ຂອງພາກສ່ວນ ກ່ຽວຂ້ອງກັບສົນທິສັນຍາກອບວຽກຂອງອົງການສະຫະປະຊາຊາດວ່າດ້ວຍການປ່ຽນແປງສະພາບຂອງດິນຟ້າອາກາດ (UNFCCC) ໄດ້ຈັດຂຶ້ນຢູ່ເມືອງໂກເປັນຮາເກັນໃນປີ 2009, ເຊິ່ງໄດ້ບັນລຸຂໍ້ຕົກລົງຮ່ວມກັນຂອງ ບັນດາຜູ້ເຂົ້າຮ່ວມໃນການພັດທະນາຊຸດມາດຕະການປ້ອງກັນເພື່ອປ້ອງກັນສັງຄົມ ແລະ/ຫຼື ການເສື່ອມໂຊມ ຂອງສະພາບແວດລ້ອມ ຫຼື ໄພອັນຕະລາຍຕໍ່ຊຸມຊົນຕ່າງໆທີ່ຂຶ້ນກັບປ່າໄມ້ ແລະ ການເພີ່ມຜົນປະໂຫຍດ ໃຫ້ແກ່ເຂົາເຈົ້າໃນຮູບການທີ່ມີຄວາມສະເໝີພາບ. ຫຼັງຈາກນັ້ນ ຂໍ້ຕົກລົງດັ່ງກ່າວນີ້ໄດ້ຮັບການປັບປຸງເຂົ້າໃນ ສັນຍາໜຶ່ງສະບັບໃນຊ່ວງກອງະຊຸມ COP 16 ທີ່ນະຄອນກັນການ ແລະ ໄດ້ໃສ່ຊື່ວ່າ ສັນຍາກັນການ. ດັ່ງທີ່ ໄດ້ກ່າວມາແລ້ວ, ສັນຍາດັ່ງກ່າວໄດ້ກວາມເອົາທັງສາມອົງປະກອບຂອງຄວາມທ່ຽງທຳ. ເອກະສານຊ້ອນທ້າຍ ທີ 1 ຂອງສັນຍາໄດ້ກຳນົດຄຳແນະນຳ ແລະ ການປ້ອງກັນສຳລັບການເຮັດວຽກດ້ານນະໂຍບາຍ ແລະ ສິ່ງຈູງ ໃຈດ້ານບວກ ກ່ຽວກັບບັນຫາຕ່າງໆທີ່ພົວພັນເຖິງແຜນງານ REDD+ (ເບິ່ງກ່ອງຂໍ້ມູນທີ 3); ໂດຍສະເພາະ ການເຄົາລົບຄວາມຮູ້ ແລະ ສິດທິຂອງຜູ້ຄົນທ້ອງຖິ່ນ ແລະ ສະມາຊິກຂອງຊຸມຊົນທ້ອງຖິ່ນ, ລວມທັງການມີ ສ່ວນຮ່ວມຢ່າງເຕັມສ່ວນ ແລະ ມີຜະສິດທິຜົນຂອງພາກສ່ວນທີ່ກ່ຽວຂ້ອງ, ໂດຍສະເພາະຜູ້ຄົນທ້ອງຖິ່ນ ແລະ ຊຸມຊົນທ້ອງຖິ່ນ, ແມ່ນເປັນສິ່ງສຳຄັນທີ່ສຸດໃນການນຳໄປສູ່ຄວາມກ້າວໜ້າຂອງຄວາມທ່ຽງທຳໃນຂະ ແໜງປ່າໄມ້, ການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+.

ຖະແຫຼງການຂອງອົງການສະຫະປະຊາຊາດວ່າດ້ວຍສິດທິຂອງຜູ້ຄົນທ້ອງຖິ່ນ (UNDRIP), ໄດ້ຖືກຮັບຮອງເອົາໃນປີ 2007, ເຊິ່ງເປັນການຮັບຮູ້ສິດທິຂອງຜູ້ຄົນທ້ອງຖິ່ນກ່ຽວກັບບັນຫາຕ່າງໆໃນວົງກວ້າງ ແລະ ໄດ້ສ້າງກອບວຽກສາກົນໃຫ້ແກ່ປະຊາຄົມສາກົນ, ໂດຍສະເພາະ ກອບວຽກດັ່ງກ່າວໄດ້ລວມເອົາຫຼັກການຄວາມເຫັນດີເຫັນພ້ອມ ຢ່າງເປັນອິດສະຫຼະ, ໂດຍຮັບຮູ້ລ່ວງໜ້າ. ສັນຍາກັນການຍັງໝາຍເຖິງ ຄວາມສອດຄ່ອງກັບຖະແຫຼງການຂອງອົງການສະຫະປະຊາຊາດວ່າດ້ວຍສິດທິຂອງຜູ້ຄົນທ້ອງຖິ່ນອີກດ້ວຍ, ໂດຍສະເພາະ ການຮັບຮູ້ຄຸນຄ່າຂອງຄວາມຮູ້ ແລະ ສິດທິຂອງຜູ້ຄົນທ້ອງຖິ່ນ ແລະ ຊຸມຊົນທ້ອງຖິ່ນອື່ນໆ ເພື່ອສົ່ງເສີມຄວາມທ່ຽງທຳຂອງແຜນງານ REDD+.

---

Weiss, E.B., 1990. ສິດທິ ແລະ ພັນທະຂອງພວກເຮົາທີ່ມີຕໍ່ສະພາບແວດລ້ອມສຳລັບຄົນລຸ່ນອະນາຄົດ. ບົດຄວາມກົດໝາຍສາກົນຂອງອາເມລິກາ ສະບັບທີ 84, ໜ້າ 198-207. ສາມາດເບິ່ງໄດ້ທີ່: http://dx.doi.org/10.2307/2203020



### ກ່ອງຂໍ້ມູນທີ 3: ການປ້ອງກັນຂອງ UNFCCC - ສັນຍາກັນການ

ພາກສ່ວນຕ່າງໆ ທີ່ສົນທິສັນຍາກອບວຽກຂອງອົງການສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງຂອງສະພາບດິນຟ້າອາກາດໄດ້ເຫັນດີເປັນເອກະພາບໃນການປ້ອງກັນທັງເຈັດຂອງແຜນງານ + 7 ຢ່າງ ຢູ່ໃນກອງປະຊຸມສະພາຄັ້ງທີ 16 (COP 16) ຢູ່ນະຄອນກັນການ, ເຊິ່ງເອີ້ນວ່າ ການປ້ອງກັນກັນການ. ການປ້ອງກັນເຫຼົ່ານີ້ແມ່ນໄດ້ຈາກການຮັບຮູ້ຄວາມສ່ຽງຕ່າງໆໃນດ້ານສັງຄົມ ແລະ ສິ່ງແວດລ້ອມທີ່ພົວພັນ ເຖິງແຜນງານ REDD+ ແລະ ຄວາມສຳຄັນຂອງຜົນປະໂຫຍດໃນຫຼາຍໆດ້ານໃຫ້ແກ່ຊຸມຊົນຕ່າງໆທີ່ມີ. ອີງຕາມສັນຍາກັນການແລ້ວ, ໃນເວລາຈັດຕັ້ງປະຕິບັດແຜນງານ REDD+ , ການປ້ອງກັນລຸ່ມນີ້ຄວນໄດ້ຮັບການສົ່ງເສີມ ແລະ ສະໜັບສະໜູນ:

1. ການປະຕິບັດແຜນງານ REDD+ ຕ້ອງປະກອບສ່ວນເຂົ້າໃນ ຫຼືສອດຄ່ອງກັບຈຸດປະສົງຕ່າງໆຂອງແຜນງານ ແຫ່ງຊາດວ່າດ້ວຍການຄຸ້ມຄອງປ່າໄມ້ ແລະ ສົນທິສັນຍາ ແລະ ສັນຍາສາກົນອື່ນໆ;
2. ໂຄງສ້າງການຄຸ້ມຄອງບໍລິຫານປ່າໄມ້ແຫ່ງຊາດຕ້ອງມີຄວາມໂປ່ງໃສ ແລະ ມີຜະສິດທິຜົນ, ຕ້ອງໄດ້ຮັບການ ພິຈາລະນາເຂົ້າໃນກົດໝາຍແຫ່ງຊາດ ແລະ ອະທິປະໄຕຂອງຊາດ;
3. ເຄົາລົບຄວາມຮູ້ ແລະ ສິດທິຕ່າງໆຂອງຜູ້ຄົນທ້ອງຖິ່ນ ແລະ ຂອງສະມາຊິກຊຸມຊົນທ້ອງຖິ່ນ, ໂດຍຄຳນຶງເຖິງພັນທະສາກົນ, ສະພາບ ແລະ ກົດໝາຍຂອງຊາດ, ແລະ ໃຫ້ຮັບຮູ້ວ່າ ສະພາສູງຂອງອົງການສະຫະປະຊາຊາດ ໄດ້ຮັບຮອງເອົາສົນທິສັນຍາກອບວຽກຂອງອົງການສະຫະປະຊາຊາດ ວ່າດ້ວຍ ການປ່ຽນແປງສະພາບດິນຟ້າ ອາກາດ;
4. ການມີສ່ວນຮ່ວມຢ່າງເຕັມສ່ວນ ແລະ ມີຜະສິດທິຜົນຂອງພາກສ່ວນທີ່ກ່ຽວຂ້ອງ, ໂດຍສະເພາະຂອງຜູ້ຄົນ ທ້ອງຖິ່ນ ແລະ ຊຸມຊົນທ້ອງຖິ່ນ, ຢູ່ໃນການປະຕິບັດແຜນງານ REDD+ ;
5. ການປະຕິບັດແຜນງານ REDD+ ດັ່ງກ່າວນັ້ນແມ່ນສອດຄ່ອງກັບສົນທິສັນຍາວ່າດ້ວຍຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ, ແລະໃຫ້ຮັບປະກັນວ່າ ການປະຕິບັດແຜນງານ ບໍ່ໄດ້ຖືກນຳໃຊ້ເພື່ອອະນຸລັກຊັບພະຍາກອນປ່າໄມ້, ແຕ່ຖືກນຳໃຊ້ເພື່ອສົ່ງເສີມການປ້ອງກັນ ແລະ ອະນຸລັກຊັບພະຍາກອນປ່າໄມ້ ແລະ ການບໍລິການໃນດ້ານຕ່າງໆຂອງລະບົບນິເວດວິທະຍາຂອງມັນ, ແລະ ເພື່ອສົ່ງເສີມຜົນປະໂຫຍດທາງສັງຄົມໃນດ້ານ ອື່ນໆແທນ;
6. ການປະຕິບັດເພື່ອແກ້ໄຂຄວາມສ່ຽງໃນດ້ານກົງກັນຂ້າມ;
7. ການປະຕິບັດເພື່ອຫຼຸດຜ່ອນການປ່ຽນແທນການປ່ອຍອາຍພິດເຮືອນແກ້ວ

ແຫຼ່ງຂໍ້ມູນ: http://unfccc.int/resource/docs/2010/cop16/eng/07a01.pdf



ໂດຍປະຕິບັດຕາມສັນຍາກັນການ, ການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ຫຼາຍຈຳນວນນຶ່ງໄດ້ພັດທະນາການປ້ອງກັນ, ຄູ່ມື ແລະ ມາດຕະຖານທາງສັງຄົມ ແລະ ສິ່ງແວດລ້ອມເພີ່ມເຕີມ, ດັ່ງທີ່ ໄດ້ກຳນົດດັ່ງລຸ່ມນີ້. ເຫຼົ່ານີ້ແມ່ນຄູ່ມືອາສາສະໝັກ, ທີ່ສາມາດປັບປຸງ ຫຼື ຮັບຮອງເອົາ ໂດຍປະເທດຕ່າງໆ ໃນຮູບການຂອງຕົນເອງ. ແຜນງາ ນທັງໝົດເຫຼົ່ານີ້ອີງໃສ່ຫຼາຍ ອົງປະກອບຂອງຄວາມທ່ຽງທຳ, ລວມທັງ ອົງປະ ກອບຂອງຫຼັກການຄວາມເຫັນດີເຫັນພ້ອມ ຢ່າງເປັນອິດສະຫຼະ, ໂດຍຮັບຮູ້ລ່ວງໜ້າ(FPIC), ທີ່ເຄົາລົບສິດທິຂອງຜູ້ຄົນທ້ອງຖິ່ນ ແລະ ຊຸມຊົນທ້ອງຖິ່ນ, ອະທິປະໄຕຂອງຊາດ, ຄວາມທ່ຽງທຳໃນການ ແບ່ງປັນຜົນປະໂຫຍດ, ການມີສ່ວນຮ່ວມຢ່າງເຕັມສ່ວນ ແລະ ມີຜະສິດທິຜົນ, ການເຂົ້າເຖິງຂໍ້ມູນຂ່າວສານ, ແລະ ການສົ່ງເສີມກຸ່ມຜູ້ດ້ອຍໂອກາດລວມທັງແມ່ຍິງ ແລະ ການມີສ່ວນຮ່ວມຂອງເຂົາເຈົ້າເຂົ້າໃນໂຄງການກາກບອນ ແລະ ຄວາມສອດຄ່ອງກັບຖະແຫຼງການອົງການສະຫະປະຊາຊາດວ່າດ້ວຍສິດທິຂອງຄົນທ້ອງຖິ່ນ (UNDRIP). ແຜນການເຫຼົ່ານີ້ລວມມີ:

- ການປະເມີນຍຸດທະສາດ້ານສິ່ງແວດລ້ອມ ແລະ ສັງຄົມ (SESA) ໄດ້ຮັບການພັດທະນາໂດຍ ສູນຮ່ວມມືດ້ານອາຍກາກບອນປ່າໄມ້ (www.forestcarbonpartnership.org/)

- ກອບຫຼັກການດ້ານສັງຄົມ ແລະ ສິ່ງແວດລ້ອມ ສຳລັບ ແຜນງານ +ໄດ້ຮັບການພັດທະນາໂດຍ UN-REDD (www.un-redd.org)

- ມາດຕະຖານດ້ານສັງຄົມ ແລະ ສິ່ງແວດລ້ອມ (SES) ສຳລັບແຜນງານ REDD+ ຂອງເຄືອຄ່າຍດ້ານການປ່ຽນແປງຂອງດິນຟ້າອາກາດ, ຊີວະນາໆພັນ ແລະ ຊຸມຊົນ (CCBA) (www.redd-standards.org/)

- ການປ້ອງກັນສັງຄົມ ແລະ ສິ່ງແວດລ້ອມ ສຳລັບ ແຜນງານ + ຂອງເຄືອຄ່າຍປ່າຝົນເຂດຮ້ອນ (www.rainforestalliance.org/publications/redd-safeguards-guide)

- ມາດຕະຖານອາຍກາກບອນຂອງກຸ່ມແມ່ຍິງເພື່ອສ້າງການປ່ຽນແປງໃນຂະແໜງກະສິກຳ ແລະ ຊັບພະຍາກອນທຳມະຊາດ (WOCAN) (www.womenscarbon.org).

# Q7

## ສິ່ງທ້າທາຍຫຼັກເພື່ອຮັບປະກັນຄວາມທ່ຽງທຳໃນການຫຼຸດຜ່ອນການປ່ຽນແປງຂອງສະພາບດິນຟ້າອາກາດໂດຍອີງໃສ່ປ່າໄມ້ຢູ່ຂັ້ນຮາກຖານມີຫຍັງແດ່?

ການຮັບປະກັນ ແລະ ປັບປຸງຄວາມທ່ຽງທຳໃນການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ ໂດຍອີງໃສ່ ປ່າໄມ້, ໂດຍສະເພາະຢູ່ຂັ້ນຮາກຖານ, ແມ່ນວຽກທີ່ມີຄວາມທ້າທາຍ. ໂດຍພື້ນຖານແລ້ວມັນເກີດຈາກຂະແໜງ ການທີ່ຄວາມທ່ຽງທຳໄດ້ຮັບການກຳນົດ. ຍ້ອນຄວາມທ່ຽງທຳມັນຂຶ້ນຢູ່ກັບສະພາບສັງຄົມໃດໜຶ່ງ, ມັນຈຶ່ງໄດ້ ຖືກນິຍາມ ດ້ວຍຮູບແບບ ແລະ ວັດທະນະທຳທີ່ແຕກຕ່າງກັນ. ຍ້ອນແນວນັ້ນ, ແນວຄວາມຄິດຂອງຄວາມຍຸຕິທຳໃນກົນໄກການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ແຜນງານ REDD+ ກໍ່ມີຄວາມແຕກຕ່າງໄປຕາມສະຖານະການ ແລະ ວັດທະນະທຳເຊັ່ນກັນ. ນີ້ໝາຍຄວາມວ່າ ການສົ່ງເສີມຄວາມ ທ່ຽງທຳເປັນສິ່ງທີ່ຕ້ອງໄດ້ປະຕິບັດກ່ອນວຽກງານອື່ນ, ມັນມີຄວາມສຳຄັນໃນການສ້າງຄວາມເຂົ້າໃຈໃນດ້ານສັງ ຄົມ-ວັດທະນະທຳ ແລະ ກາຍຍະວິທະຍາ; ເພື່ອກຳນົດກອບຄວາມເຂົ້າໃຈ ແລະ ການນຳໃຊ້ ຮູບແບບຂອງ ຄວາມທ່ຽງທຳ ມັນມີຄວາມຈຳເປັນຕ້ອງໄດ້ວິໄຈກ່ຽວກັບຜູ້ທີ່ຈະເຂົ້າຮ່ວມ ໃນການກຳນົດວ່າອັນໃດແມ່ນຄວາມ ຍຸຕິທຳ ແລະ ອັນໃດແມ່ນແມ່ນຄວາມບໍ່ຍຸຕິທຳ, ແລະ ກຳນົດວິທີການຕ່າງໆທີ່ຈະນຳໃຊ້ເພື່ອກຳນົດຄວາມຍຸຕິທຳ.

ອຳນາດ ແລະ ສາຍພົວພັນຂອງອຳນາດຢູ່ຂັ້ນທ້ອງຖິ່ນແມ່ນອີກປັດໃຈໜຶ່ງທີ່ຕັດສິນຄວາມທ່ຽງທຳ. ສາຍພົວພັນອຳນາດສົ່ງຜົນກະທົບຕໍ່ຂະບວນການມີສ່ວນຮ່ວມ ແລະ ການແບ່ງປັນຄວາມທ່ຽງທຳ ແລະ ການແຈກຢາຍຊັບພະຍາກອນ ແລະ ຜົນປະໂຫຍດ. ບັນຫາຕ່າງໆເຊັ່ນ ຊົນຊັ້ນຮັ່ງມີ ຄວບຄຸມຊັບພະຍາກອນທຳມະຊາດລວມທັງມີການແບ່ງແຍກກ່ຽວກັບການແຈກຢາຍງົບປະມານ ແລະ ຜົນປະ ໂຫຍດທີ່ໄດ້ຈາກການນຳໃຊ້ຊັບພະຍາກອນທຳມະຊາດ ເຊິ່ງສິ່ງເລົ່ານີ້ ແມ່ນອາດເກີດຂຶ້ນຈາກສາຍພົວພັນຂອງອຳນາດ.

ສິ່ງທ້າທາຍອັນສຳຄັນອີກອັນໜຶ່ງ ທີ່ມີຕໍ່ການປັບປຸງຄວາມທ່ຽງທຳຢູ່ໃນກົນໄກການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+ ແມ່ນພົວພັນເຖິງຄວາມໝັ້ນຄົງຂອງສິດນຳໃຊ້ທີ່ດິນ ແລະ ການຄອບຄອງທີ່ດິນ. ຄວາມບໍ່ ຈະແຈ້ງຂອງລະບົບຄອບຄອງທີ່ດິນ, ແລະ ສິດ ແລະ ຄວາມຮັບຜິດຊອບຂອງແຜນງານ REDD+ ຕໍ່ຜູ້ຖືສິດ ໃນລະ ດັບຕ່າງໆ, ອາດນຳໄປສູ່ການໄດ້ຮັບສິດທິທີ່ມີມາແຕ່ກ່ອນດ້ວຍຮູບການທີ່ບໍ່ຖືກຕ້ອງຂອງຜູ້ຄົນທ້ອງຖິ່ນ ແລະ ຊຸມຊົນທ້ອງຖິ່ນ. ໃນສະພາບການດັ່ງກ່າວນັ້ນ, ມັນຈຶ່ງມີຄວາມຈຳເປັນຕ້ອງໄດ້ກຳນົດສິດທິຄວາມຖືກຕ້ອງ ໃນການ ເຂົ້າເຖິງຜົນປະໂຫຍດກ່ຽວກັບກາກບອນ ແລະ ບໍ່ແມ່ນກາກບອນຂອງແຜນງານ REDD+. ການຂາດຄວາມຈະແຈ້ງໃນການເຂົ້າເຖິງ ແລະ ຄວາມເປັນເຈົ້າຂອງໃນຜົນປະໂຫຍດທີ່ເປັນກາກບອນ ແລະ ບໍ່ແມ່ນກາກບອນ ແລະ ທີ່ດິນ ຈະກໍ່ໃຫ້ເກີດຄວາມບໍ່ຍຸຕິທຳຢູ່ໃນລະດັບຕ່າງໆຂອງຜູ້ທີ່ກ່ຽວຂ້ອງ, ແລະ ໂດຍສະເພາະປະຊາຊົນຜູ້ທີ່ ບໍ່ຖືກຮັບຮູ້ດ້ານສິດທິໃນຊັບພະຍາກອນ ຈະມີຄວາມເປັນໄປໄດ້ ທີ່ຈະບໍ່ໄດ້ເຂົ້າຮ່ວມໃນຂະບວນການຕັດສິນໃຈ ກ່ຽວກັບຜົນປະໂຫຍດທີ່ຈະໄດ້ຮັບຈາກແຜນງານ REDD+.

ການອອກແບບກົນໄກສຳລັບການແຈກຢາຍຄ່າງົບປະມານ ແລະ ຜົນປະໂຫຍດຈາກແຜນງານ REDD+ ແມ່ນສິ່ງທ້າທາຍອີກອັນໜຶ່ງ. ໃນທັດສະນະດ້ານຜົນປະໂຫຍດທີ່ບໍ່ແນ່ນອນຢູ່ໃນແຜນງານ REDD+, ຜູ້ຄົນທ້ອງຖິ່ນ ແລະ ຊຸມຊົນອື່ນໆທີ່ອີງໃສ່ປ່າໄມ້ເຊິ່ງເປັນຜູ້ທີ່ມີປະຫວັດຮັບຜິດຊອບການອະນຸລັກ ແລະ ນຳໃຊ້ປ່າໄມ້ ແລະ ລະບົບ ນິເວດວິທະຍາອັນອຸດົມສົມບູນອື່ນໆແບບຍືນຍົງ, ຈະເປັນຜູ້ໄດ້ຮັບຜົນປະໂຫຍດພຽງເລັກໜ້ອຍ ຫຼື ອາດຈະບໍ່ມີ ສິ່ງຈູງໃຈໃນການປະກອບສ່ວນເຂົ້າໃນການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ.



ການເຂົ້າຮ່ວມທີ່ບໍ່ພຽງພໍຂອງພາກສ່ວນທີ່ກ່ຽວຂ້ອງຂັ້ນຮາກຖານໃນການເຈລະຈາລະດັບສາກົນກ່ຽວກັບບັນຫາການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+ ເປັນສິ່ງກີດຂວາງອີກອັນໜຶ່ງທີ່ສຳຄັນ. ບັນຫາ ສ່ວນໃຫຍ່ແມ່ນພົວພັນເຖິງຄວາມບໍ່ເຂົ້າໃຈກ່ຽວກັບບັນຫາການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+ ຂອງບັນດາພາກສ່ວນທີ່ກ່ຽວຂ້ອງຂັ້ນຮາກຖານ ແລະ ຜູ້ຕາງໜ້າຂອງເຂົາເຈົ້າ, ແລະ ດັ່ງນັ້ນ ຈຶ່ງເຮັດ ໃຫ້ເຂົາເຈົ້າມີຄວາມສາມາດຕ່ຳໃນການອອກສິດອອກສຽງໄດ້ຢ່າງມີຜະລິດທິຜົນຕໍ່ບັນຫາຂອງຕົນ ແລະ ຕໍ່ກັບ ຜູ້ອອກນະໂຍບາຍ ແລະ ຜູ້ທີ່ມີອຳນາດໃນການຕັດສິນໃຈອື່ນໆໃນລະດັບຕ່າງໆ. ຍິ່ງໄປກວ່ານັ້ນ, ການຂາດ ການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+, ໂດຍສະ ເພາະການຂາດຂໍ້ມູນເປັນພາສາທ້ອງຖິ່ນ, ໄດ້ກາຍເປັນຂໍ້ຈຳກັດອັນສຳຄັນໃຫ້ແກ່ການມີສ່ວນຮ່ວມຢ່າງມີ ຄວາມໝາຍຂອງພາກສ່ວນກ່ຽວຂ້ອງຢູ່ຂັ້ນຮາກຖານໃນຂະບວນການຕັດສິນໃຈ. ຍ້ອນຂໍ້ຈຳກັດເຫຼົ່ານີ້, ມັນ ຈຶ່ງເຮັດໃຫ້ມີຄວາມສ່ຽງທີ່ຜົນໄດ້ຮັບອາດຈະບໍ່ເປັນທີ່ໜ້າເພິ່ງພໍໃຈ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນຮາກ ຖານ, ແລະຄວາມດ້ອຍໂອກາດຂອງເຂົາເຈົ້າ ເຮັດໃຫ້ເຂົາເຈົ້າບໍ່ໄດ້ເຂົ້າຮ່ວມໃນວຽກງານໜັບສະໜູນໂຄງການຂອງແຜນງານ REDD+. ໄດ້ຢ່າງເຕັມທີ່

ໃນດ້ານສັງຄົມ-ວັດທະນະທຳ, ມັນມີຄວາມສຳຄັນທີ່ຕ້ອງຮັບຮູ້ຄວາມອຸດົມສົມບູນ ແລະ ຄຸນຄ່າຂອງຄວາມຮູ້ດັ່ງເດີມຂອງຜູ້ຄົນທ້ອງຖິ່ນ ແລະ ຊຸມຊົນອື່ນໆທີ່ອາໄສປ່າໄມ້, ໂດຍສະເພາະໃນເວລາອອກແບບແຜນງານ ແກ້ໄຂບັນຫາການປ່ຽນແປງຂອງດິນຟ້າອາກາດ ແລະ ຜົນໄດ້ຮັບຂອງແຜນງານ REDD+. ໃນປັດຈຸບັນຂະນະ ທີ່ການສົນທະນາກ່ຽວກັບຄວາມທ່ຽງທຳຂອງແຜນງານ REDD+ ເນັ້ນໃສ່ບັນຫາຕ່າງໆທີ່ພົວພັນເຖິງຜູ້ຄົນທ້ອງ ຖິ່ນ ແລະ ຊຸມຊົນທ້ອງຖິ່ນນັ້ນ, ໄດ້ມີຄວາມຈຳເປັນຕ້ອງໄດ້ຮັບຮູ້ ແລະ ຮຽນຮູ້ຈາກຄວາມຮູ້ ແລະ ການປະຕິ ບັດຂອງທ້ອງຖິ່ນ. ເປັນທີ່ໜ້າເສຍດາຍທີ່ໃນປັດຈຸບັນຄວາມຮູ້ເຫຼົ່ານັ້ນຍັງບໍ່ທັນໄດ້ຮັບຄວາມເອົາໃຈໃສ່ຫຼາຍ ເທົ່າທີ່ຄວນ ຢູ່ໃນການສົນທະນາກ່ຽວກັບແຜນງານ REDD+ ດັ່ງນັ້ນ ມັນຈຶ່ງເປັນໄປໄດ້ສູງ ທີ່ແຜນງານ REDD+ ຈະບໍ່ປະສົບຜົນສຳເລັດ .




# ພາກທີ 4: ການພັດທະນາຄວາມສາມາດ ເພື່ອປັບປຸງ ຄວາມທ່ຽງທຳຢູ່ຂັ້ນຮາກຖານ

# Q8

## ພາລາບົດບາດຂອງຜູ້ອໍານວຍຄວາມສະດວກຢູ່ຂັ້ນຮາກຖານ ໃນການປັບປຸງຄວາມທ່ຽງທໍາ ໃນການຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດ ແລະ ຂອງແຜນງານ REDD+ມີຫຍັງແດ່?

ການປະກອບສ່ວນແບບມີສ່ວນຮ່ວມ ເປັນຂະບວນການ ທີ່ຄອບຄຸມຄວາມຫຼາກຫຼາຍຂອງມະນຸດ ແລະ ເນັ້ນໃສ່ການສ້າງພະລັງງານ ຜ່ານອາລົມ, ການພົວພັນ ແລະ ການສົນທະນາ ທີ່ເປັນຊ່ອງທາງທີ່ນໍາໄປສູ່ການ ປະຕິບັດຂອງບຸກຄົນ ຫຼື ຂອງລວມໝູ່ ກ່ຽວກັບບັນຫາຕ່າງໆ.

ຄວນຄໍານຶງສະເໜີ ຄໍານິຍາມການປະກອບສ່ວນ ດັ່ງທີ່ໄດ້ກ່າວມາຂ້າງເທິງນີ້, ຜູ້ອໍານວຍຄວາມສະດວກ ຂັ້ນຮາກຖານຕ້ອງມີພາລະບົດບາດຫຼາຍຢ່າງໃນການແກ້ໄຂສິ່ງກີດຂວາງ ແລະ ສິ່ງທ້າທາຍຫຼັກ, ແລະ ອໍານວຍ ຄວາມສະດວກໃຫ້ແກ່ການປະກອບສ່ວນຂອງພາກສ່ວນທີ່ກ່ຽວຂ້ອງຂັ້ນຮາກຖານ ໃນການປັບປຸງຄວາມທ່ຽງ ທໍາ ໃນວຽກງານການປ່ຽນແປງຂອງດິນຟ້າອາກາດ ແລະ ຂອງແຜນງານ REDD+. ບາງພາລະບົດບາດຫຼັກຂອງຜູ້ອໍານວຍຄວາມສະດວກຂັ້ນຮາກຖານ ທີ່ສາມາດນໍາໃຊ້ເພື່ອສົ່ງເສີມຄວາມທ່ຽງທໍາລວມມີ:

- **ເປັນຜູ້ຈັດຕັ້ງປະຕິບັດຂັ້ນຊຸມຊົນ -** ຊ່ວຍຊຸມຊົນໃນການກະກຽມໃນດ້ານຕ່າງໆ, ລວມທັງການອໍານວຍຄວາມສະດວກ ແລະ ກໍານົດວາລະຂອງປະຊຸມຂອງກຸ່ມທີ່ເຂົ້າຮ່ວມໃນຂະບວນການ;
- **ເປັນຜູ້ອອກແບບຂະບວນການແລະໃຫ້ຄໍາແນະນໍາ -** ອອກແບບຂະບວນການປະກອບສ່ວນໄລຍະສັ້ນ ແລະ ໄລຍະຍາວ: ກໍານົດຈຸດປະສົງຢ່າງຈະແຈ້ງ ແລະ ຮັບປະກັນວ່າແຕ່ລະບາດກ້າວຂອງຂະບວນການໄດ້ເຊື່ອມໂຍງກັບບາດກ້າວອື່ນໆທີ່ມີການອະທິບາຍຢ່າງຈະແຈ້ງໃນການເຊື່ອມໂຍງລະຫວ່າງບາດກ້າວຕ່າງໆ;
- **ເປັນຜູ້ສ້າງຄວາມໝັ້ນໃຈ -** ຊ່ວຍ/ຜັກດັນຜູ້ທີ່ກ່ຽວຂ້ອງທີ່ມີຄວາມອ່ອນແອໃນການສ້າງຄວາມໝັ້ນໃຈໃນ ການອອກສຽງກ່ຽວກັບບັນຫາຕ່າງໆທີ່ເຂົາເຈົ້າເຫັນວ່າມີຄວາມສໍາຄັນ;
- **ເປັນຜູ້ສະໜອງຂໍ້ມູນ/ຜູ້ອະທິບາຍ -** ຕິດຕາມການການພັດທະນາ, ມາດຕະຖານ ແລະ ຂໍ້ມູນຂ່າວສານກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ແຜນງານ REDD+ໃຫ້ທັນສະ ພາບການ ແລະ ໃຫ້ສາມາດອະທິບາຍຂໍ້ມູນເຫຼົ່ານັ້ນໃນຮູບແບບທີ່ສາມາດເຂົ້າໃຈໄດ້ງ່າຍ ໂດຍປະສະ ຈາກການປະປົນຄວາມຄິດສ່ວນຕົວທີ່ອາດຈະສົ່ງຜົນສະທ້ອນຕໍ່ຄວາມຄິດຂອງພາກສ່ວນກ່ຽວຂ້ອງໄດ້;
- **ເປັນ ຜູ້ເຊື່ອມຕໍ່/ຜູ້ສ້າງເຄືອຄ່າຍ -** ສາມາດເຫັນໄດ້ຮູບແບບ ແລະ ການເຊື່ອມຕໍ່ລະຫວ່າງບັນດາກຸ່ມແລະບັນຫາຕ່າງໆ ແລະ ສາມາດໃຫ້ການຊ່ວຍເຫຼືອດ້ວຍຄວາມໝັ້ນໃຈເມື່ອມີຄວາມຈໍາເປັນ;
- **ຜູ້ເປັນຕົວແທນຄວາມສັດຊື່ -** ເຊື່ອມໂຍງຊຸມຊົນຕ່າງໆກັບຜູ້ສະໜອງຜະລິດຕະພັນໄປສູ່ຕະຫຼາດ ແລະ ຂະບວນການຕັດສິນໃຈທີ່ມີຄວາມເປັນທໍາ ແລະ ຄວາມໂປ່ງໃສ;



- **ເປັນຜູ້ສ້າງພື້ນທີ່ -** ສໍາລັບກັ່ນຕອງຄວາມຄິດເຫັນ ແລະ ຖ່າຍທອດທັດສະນະຄວາມຄິດ; ບາງຄົນທີ່ສາມາດສ້າງປະໂຫຍດໃຫ້ແກ່ຄົນອື່ນ, ເຊິ່ງເປັນຜູ້ທີ່ສາມາດຊອກເຫັນໂອກາດໃນການນໍາເອົາສຽງທີ່ບໍ່ມີ ໃຜໄດ້ຍິນໄປສູ່ການຕັດສິນໃຈຂອງສາທາລະນະ;

- **ເປັນຜູ້ສ້າງເອກະສານ -** ສາມາດສ້າງເອກະສານໄດ້ຢ່າງມີຜະສິດທິພາບໂດຍປາສະຈາກການປ່ຽນແປງຄວາມໝາຍຈາກຕົ້ນສະບັບ ແລະ ແລກປ່ຽນເອກະສານເຫຼົ່ານັ້ນກັບພາກສ່ວນອື່ນໆ;

- **ເປັນຜູ້ນໍາດ້ານຄວາມສະເໝີພາບດ້ານບົດບາດຍິງຊາຍ -** ສາມາດສະແດງຄວາມເປັນຜູ້ນໍາໃນຄວາມແຕກຕ່າງດ້ານການສົ່ງເສີມບົດບາດຍິງຊາຍ ແລະ ບັນທັດຖານຕ່າງໆ; ທີ່ເຮັດໃຫ້ແມ່ຍິງ ແລະ ຜູ້ຊາຍ ມີສ່ວນຮ່ວມຢ່າງເທົ່າທຽມກັນ ແລະ ຢ່າງມີຄວາມໝາຍໃນການຕັດສິນໃຈ ແລະ ແບ່ງປັນຜົນປະໂຫຍດຢ່າງຍຸດຕິທໍາ;

- **ເປັນຜູ້ສົ່ງເສີມການປຶກສາຫາລືຂອງຫຼາຍພາກສ່ວນ -** ສ້າງໂອກາດ ແລະ ນໍາໃຊ້ເຕັກນິກຕ່າງໆເພື່ອຊຸກຍູ້ການປຶກສາຫາລືລະຫວ່າງພາກສ່ວນຕ່າງໆ ແລະ ກ້າວໄປເຖິງຄວາມເຂົ້າໃຈເຊິ່ງກັນ ແລະ ກັນຂອງກຸ່ມຕ່າງໆ;

- **ເປັນຜູ້ສົ່ງເສີມ -** ຮັບປະກັນ ແລະ ສົ່ງເສີມຜູ້ຄົນທ້ອງຖິ່ນ ແລະ ຊຸມຊົນທີ່ອາໃສປ່າໄມ້ ໃຫ້ເຂົ້າຮ່ວມໃນການຕັດສິນໃຈໃນແຜນງານ + ຢູ່ຈຸດທີ່ເຫັນວ່າມີຄວາມຈໍາເປັນ.



ໃນເວລາປະຕິບັດໜຶ່ງ ຫຼື ຫຼາຍພາລະບົດບາດ, ໜຶ່ງໃນການພິຈາລະນາຂັ້ນພື້ນຖານ ແລະ ສຳຄັນທີ່ສຸດທີ່ ຜູ້ອຳນວຍຄວາມສະດວກຂັ້ນຮາກຖານຕ້ອງໄດ້ພິຈາລະນາແມ່ນເນື້ອໃນຄວາມເປັນກາງໃນການສົ່ງເສີມຄວາມທ່ຽງທຳ. ນີ້ໝາຍຄວາມວ່າຜູ້ອຳນວຍຄວາມສະດວກເອງບໍ່ຈຕ້ອງຕັດສິນ ຫຼື ສະແດງບົດບາດໃນໜຶ່ງ, ເຊິ່ງແມ່ນກຸ່ມຜູ້ທີ່ກ່ຽວຂ້ອງຈະເປັນຜູ້ກຳນົດ ວ່າແມ່ນຫັຍງແມ່ນ ຄວາມທ່ຽງທຳສຳລັບເຂົາ ແລະ ຈະນຳໃຊ້ມັນແນວໃດຢູ່ໃນສັງຄົມ-ວັດທະນະທຳ ແລະ ກາຍຍະວິທະຍາຂອງເຂົາເຈົ້າ. ໃນການສົ່ງເສີມຄວາມທ່ຽງທຳດ້ານດ້ານບາດກ້າວ, ມັນມີຄວາມສຳຄັນຢ່າງຍິ່ງສຳລັບຜູ້ອຳນວຍຄວາມສະດວກຂັ້ນຮາກຖານທີ່ຕ້ອງພິຈາລະນາ ແລະ ຮັບຮູ້ກຸ່ມຜູ້ດ້ອຍໂອກາດທີ່ຄວາມແຕກຕ່າງກັນ, ແລະ ຮັບປະກັນວ່າເຂົາເຈົ້າສາມາດອອກສິດອອກສຽງຕໍ່ກັບບັນຫາທີ່ເຂົາເຈົ້າມີຄວາມກັງວົນ ແລະ ພົວພັນເຖິງຜົນປະໂຫຍດຂອງເຂົາເຈົ້າໄດ້ຢ່າງມີຜະສິດທິຜົນ, ໂດຍການຊຸກຍູ້ໃຫ້ເຂົາເຈົ້າມີສ່ວນຮ່ວມຢ່າງຫ້າວຫັນ . ສິ່ງທີ່ເຊື່ອມໂຍງກັບບັນຫາດັ່ງກ່າວແມ່ນດ້ານຂະແໜງການຂອງຄວາມທ່ຽງທຳ, ເຊິ່ງມີຄວາມ ຈຳເປັນຕ້ອງໄດ້ກຳນົດກຸ່ມຜູ້ດ້ອຍໂອກາດຢູ່ສະເໝີ ແລະ ຮັບປະກັນວ່າດ້ານຜົນປະໂຫຍດຂອງເຂົາເຈົ້າໄດ້ຖືກ ລວມເຂົ້າໃນການວາງແຜນ ແລະ ການຈັດຕັ້ງປະຕິບັດຂອງໂຄງການແຜນງານ + ໂດຍການພັດທະນາ ຄວາມສາມາດ ແລະ ຊຸກຍູ້ການເຂົ້າເຖິງ ແລະ ການຄວບຄຸມຜົນປະໂຫຍດທີ່ກ່ຽວກັບກາກບອນ ແລະ ບໍ່ແມ່ນກາກບອນຂອງແຜນງານ REDD+.

# Q9

## ມາດຕະຖານຕົ້ນຕໍ ແລະ ຕົວຊີ້ວັດຫຼັກສໍາລັບຕິດຕາມຄວາມທ່ຽງທໍາໃນຂະແໜງປ່າໄມ້ ແລະ ການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+ມີຫຍັງແດ່?

ເພື່ອຮັບປະກັນປະສິດທິຜົນຂອງການເຊື່ອມສານຂອງຫຼັກການພື້ນຖານ ແລະ ຄຸນຄ່າຕ່າງໆຂອງຄວາມທ່ຽງທໍາໃນຂະແໜງປ່າໄມ້, ດ້ານການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ +, ມັນມີຄວາມຈໍາເປັນໃນການຕິດຕາມສານອົງປະກອບຄວາມທ່ຽງທໍາ. ຕາຕະລາງໂດຍຫຍໍ້ກ່ຽວກັບມາດຖານ ແລະ ຕົວຊີ້ວັດຕົ້ນຕໍທີ່ອາດຊ່ວຍ ໃນການຕິດຕາມຄວາມທ່ຽງທໍາໄດ້ສະແດງໃນຕາຕະລາງລຸ່ມນີ້:

**ຄວາມທ່ຽງທໍາດ້ານການແຈກຢາຍ -** ອົງປະກອບອັນສໍາຄັນຂອງຄວາມທ່ຽງທໍາ ດ້ານການແຈກຢາຍລວມມີງົບປະມານ, ຄວາມສ່ຽງ ແລະ ຜົນປະໂຫຍດທີ່ຕ້ອງໄດ້ຮັບການແຈກຢາຍດ້ວຍຄວາມສະເໝີພາບ ແລະ ຍຸຕິທໍາໃນທົ່ວພາກສ່ວນທີ່ກ່ຽວຂ້ອງ. ລາຍການກວດສອບລຸ່ມນີ້ໄດ້ກໍານົດອົງປະກອບຕົ້ນຕໍຂອງຄວາມທ່ຽງທໍາດ້ານການ ແຈກຢາຍ ແລະ ການສະໜອງຂໍ້ມູນດ້ານປະລິມານ ແລະ ຄຸນນະພາບທີ່ຈໍາເປັນຕ້ອງໄດ້ຮັບການເກັບກໍາເພື່ອຕິດຕາມການຈັດຕັ້ງປະຕິບັດ ແລະ ຜະລິດທິຜົນຂອງຄວາມທ່ຽງທໍາດ້ານການແຈກຢາຍຢູ່ໃນແຜນງານ REDD+:

| ບັນຫາຕົ້ນຕໍ | ປະເພດຂໍ້ມູນຂ່າວສານ/ຂໍ້ມູນຕົວເລກທີ່ຕ້ອງໄດ້ເກັບກໍາສໍາລັບການຕິດຕາມ |
|---|---|
| ຄ່າໃຊ້ຈ່າຍ | • ປະເພດງົບປະມານ - ການປະກອບສ່ວນເປັນເງິນແລະວັດຖຸຈາກພາກສ່ວນທີ່ກ່ຽວຂ້ອງທ້ອງຖິ່ນ ໂດຍຜ່ານການອອກແຮງງານເຂົ້າໃນຫຼາຍກິດຈະກໍາຄຸ້ມຄອງປ່າໄມ້ ເຊັ່ນ: ການລາດຕະເວນ, ການປູກ, ການປູກທົດແທນ ແລະ ອື່ນໆ<br>• ການປະກອບສ່ວນໃສ່ງົບປະມານເຫຼົ່ານັ້ນ - ໃຜຕ້ອງຮັບຜິດຊອບ ຫຼືປະກອບສ່ວນເປັນເງິນ ຫຼື ເວລາສໍາລັບກິດຈະກໍາຄຸ້ມຄອງປ່າໄມ້ຫຼາຍປານໃດ ແລະ ຕ້ອງປະກອບສ່ວນເມື່ອໃດ. |
| ຄວາມສ່ຽງ | • ການເຂົ້າເຖິງຊັບພະຍາກອນປ່າໄມ້ທີ່ຖືກເຂັ້ມງວດ ຫຼືຈໍາກັດ,ສິ່ງທ້າທາຍຕໍ່ການດໍາລົງຊີວິດ, ຄວາມ ເປັນໄປໄດ້ໃນການແບ່ງແຍກກຸ່ມອື່ນໆອອກຈາກການຕັດສິນໃຈ ແລະ ຂະບວນການແບ່ງປັນ ຜົນປະໂຫຍດ, ຄວາມຄາດຫວັງທີ່ບໍ່ແທດເໝາະກັບຄວາມເປັນຈິງຂອງພາກສ່ວນທີ່ກ່ຽວ ຂ້ອງຂັ້ນທ້ອງຖິ່ນ ແລະຄ່າໃຊ້ຈ່າຍທີ່ສູງກວ່າຜົນປະໂຫຍດ. |
| ຜົນປະໂຫຍດ | • ຜົນປະໂຫຍດທີ່ເປັນເງິນ ແລະ ຜົນປະໂຫຍດດ້ານອື່ນໆ ທີ່ໄດ້ຈາກປ່າໄມ້,ເຊັ່ນ:ລາຍຮັບ (ການຈ່າຍຂອງບຸກຄົນ ແລະ/ຫຼື ນໍາໃຊ້ເຂົ້າໃນໂຄງການຕ່າງໆຂອງຊຸມຊົນ) ທີ່ໄດ້ຈາກຊັບພະຍາກອນທີ່ເປັນກາກບອນ ແລະ ບໍ່ແມ່ນກາກບອນທີ່ໄດ້ຈາກປ່າໄມ້, ໄດ້ປັບປຸງການເຂົ້າເຖິງດ້ານຜົນປະໂຫຍດເຫຼົ່ານັ້ນ, ກິດຈະກໍາສ້າງລາຍຮັບອັນໃໝ່, ໄດ້ຂະຫຍາຍການມີສ່ວນຮ່ວມຂອງແມ່ຍິງ ແລະ ກຸ່ມຜູ້ດ້ອຍໂອກາດຂອງຊຸມຊົນຕ່າງໆຢູ່ໃນແຜນງານ REDD+;<br>• ປະຫວັດຄວາມເປັນມາຂອງການປ່ຽນແປງ ແລະ ຫຼັກຖານດ້ານເອກະສານທີ່ພົວພັນເຖິງ ສິດທິ ແລະ ຜົນປະໂຫຍດ. |

**ຄວາມທ່ຽງທຳດ້ານລະບຽບການ** ພິຈາລະນາທັງພາກສ່ວນທີ່ກ່ຽວຂ້ອງ ແລະ ສິດທິຂອງຜູ້ຖືກຳມະສິດ ໃຫ້ມີໂອກາດເຂົ້າຮ່ວມ ແລະ ອອກສຽງຕໍ່ບັນຫາທີ່ກ່ຽວຂ້ອງ ແລະ ຂະບວນການຕັດສິນໃຈໄດ້ຢ່າງມີຜະສິດ ທິຜົນ. ລາຍການກວດສອບລຸ່ມນີ້ໃຫ້ຄຳແນະນຳກ່ຽວກັບຕົວຊີ້ວັດຫຼັກ ແລະ ການຕອບສະໜອງຂໍ້ມູນເພື່ອ ວັດແທກຕົວຊີ້ວັດຕ່າງໆໃຫ້ແກ່ການຕິດຕາມຄວາມທ່ຽງທຳດ້ານລະບຽບການ:

| ບັນຫາຕົ້ນຕໍ | ປະເພດຂໍ້ມູນຂ່າວສານ/ຂໍ້ມູນຕົວເລກທີ່ຕ້ອງໄດ້ເກັບກຳສຳລັບການຕິດຕາມ |
|---|---|
| ອົງປະກອບຂອງພາກສ່ວນທີ່ກ່ຽວຂ້ອງຫຼັກ ແລະ ຄະນະກຳມະການຕັດສິນໃຈລະດັບທ້ອງຖິ່ນ | • ການວິໄຈພາກສ່ວນທີ່ກ່ຽວຂ້ອງຫຼັກ;<br>• ສະມາຊິກທີ່ເປັນແມ່ຍິງ, ຊົນເຜົ່າ ແລະ ຜູ້ດ້ອຍໂອກາດອື່ນໆ ໄດ້ເຂົ້າຮ່ວມໃນຄະນະກຳມະການຕັດສິນບັນຫາ;<br>• ບາດກ້າວການຄັດເລືອກ/ປ່ອນບັດຄັດເລືອກສະມາຊິກຄະນະກຳມະການຕັດສິນບັນຫາ;<br>• ການກຳນົດບັນຫາຫຼັກຂອງຄວາມທ່ຽງທຳ ແລະ ສິ່ງຈູງໃຈ ຫຼື ສິ່ງກີດຂວາງໃຫ້ແກ່ການມີສ່ວນຮ່ວມຂອງແຕ່ລະກຸ່ມ |
| ຂະບວນການຕັດສິນໃຈ | • ໃຫ້ມີກົດໝາຍ ແລະ ກົດລະບຽບພາຍໃນ ຕ່າງໆສ້າງຂຶ້ນໂດຍຜູ້ທີ່ ຕັດສິນທ້ອງຖິ່ນສຳລັບການຄຸ້ມຄອງປ່າໄມ້ ແລະ ວິທີການເກັບກູ້ຊັບພະຍາກອນ;<br>• ຄວາມຮູ້ ແລະ ການປະຕິບັດການນຳໃຊ້ອົງປະກອບຂອງຫຼັກການຄວາມເຫັນດີເຫັນພ້ອມ ຢ່າງເປັນອິດສະຫຼະ, ໂດຍຮັບຮູ້ລ່ວງໜ້າເຂົ້າໃນການຕັດສິນໃຈແບບມີສ່ວນຮ່ວມ;<br>• ໃຫ້ມີກົດໝາຍ ແລະ ກົດລະບຽບພາຍໃນ ຕ່າງໆ ເພື່ອສົ່ງເສີມຄວາມເຂັ້ມແຂງດ້ານບົດບາດຍິງຊາຍ ແລະ ສັງຄົມໃນການເຂົ້າຮ່ວມໃນການຕັດສິນໃຈ,ການເຂົ້າເຖິງຊັບພະຍາກອນປ່າໄມ້ ແລະ ກົນໄກການແບ່ງປັນຜົນປະໂຫຍດ ໃນດ້ານຕ່າງໆ;<br>• ຈຳນວນເທື່ອຂອງກອງປະຊຸມ (ມີຈັກກອງປະຊຸມໃນແຕ່ລະເດືອນ ຫຼື ແຕ່ລະປີ) ທີ່ ຈະຈັດໂດຍຄະນະກຳມະການຕັດສິນໃຈ, ແລະ ບັນທຶກກອງປະຊຸມໄດ້ຮັບການບັນທຶກ;<br>• ແຜນການຕິດຕາມການຕັດສິນໃຈໃນກອງປະຊຸມທີ່ຜ່ານມາ;<br>• ກົນໄກການຮ້ອງທຸກໄດ້ຮັບການສ້າງຂຶ້ນ ແລະ ຊຸມຊົນທ້ອງຖິ່ນໄດ້ຮັບຮູ້ກົນໄກດັ່ງກ່າວ. |
| ຄວາມໂປ່ງໃສ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ | • ເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບການຄຸ້ມຄອງປ່າໄມ້ ລວມທັງຂໍ້ມູນຂ່າວສານກ່ຽວກັບສາຍເຫດຂອງການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ, ການດຳເນີນທຸລະກຳທາງການເງິນສຳລັບກິດຈະກຳການຄຸ້ມຄອງປ່າໄມ້, ຊັບພະຍາກອນ ແລະ ຄ່າໃຊ້ຈ່າຍຕ່າງໆຂອງກອງທຶນ ແລະ ກົນໄກການແບ່ງປັນ ຜົນປະໂຫຍດ (ຖ້າມີ), ໄດ້ຮັບການສ້າງຂຶ້ນ;<br>• ຂໍ້ມູນຂ່າວສານກ່ຽວກັບຄວາມສ່ຽງ, ສິ່ງທ້າທາຍ ແລະ ໂອກາດຄ່າໃຊ້ຈ່າຍຂອງແຜນງານ REDD+;<br>• ກອງປະຊຸມປຶກສາຫາລືຫຼາຍພາກສ່ວນທີ່ມີຢູ່ ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງຢູ່ຂັ້ນທ້ອງຖິ່ນທີ່ສາມາດເຂົ້າຮ່ວມໃນການສົ່ງເສີມຄວາມທ່ຽງທຳຢູ່ໃນແຜນງານ REDD+;<br>• ຄວາມຮູ້ກ່ຽວກັບໂຄງການ/ກິດຈະ ກຳອື່ນໆກ່ຽວກັບການພັດທະນາທີ່ອີງໃສ່ທີ່ດິນປ່າໄມ້ທີ່ອາດ ຈະສ້າງ ຜົນໄດ້ ຮັບໃຫ້ ແກ່ການອອກກ ແບບ ແລະ ຈັດຕັ້ງ ປະຕິບັດໂຄງການແຜນງານ REDD+ ໄດ້. |

**ຄວາມທ່ຽງທຳດ້ານສະພາບການ** ໝາຍເຖິງວ່າ ສະພາບການ, ຄວາມອາດສາມາດ ແລະ ສະພາບ ແວດລ້ອມທີ່ມີໃນປັດຈຸບັນຈະນຳໄປສູ່ການສົ່ງເສີມ ການສະໜັບສະໜູນໃຫ້ແກ່ຄວາມທ່ຽງທຳ ດ້ານການ ແບ່ງປັນ ແລະ ລະບຽບການຫຼືບໍ່. ດ້ວຍເຫດນັ້ນ, ໃນບາດກ້າວພື້ນຖານ, ມັນມີຄວາມ ສຳຄັນທີ່ຈະຕ້ອງຮັບຮູ້ດ້ານນະໂຍບາຍ, ສະຖາບັນ ແລະ ຂະບວນການຕ່າງໆ ທີ່ກ່ຽວພັນເຖິງການເຂົ້າເຖິງຊັບພະຍາກອນຕ່າງໆ, ແລະ ກົດລະບຽບຕ່າງໆ ແລະ ຄວາມຮັບຜິດຊອບຂອງບັນດາພາກສ່ວນທີ່ກ່ຽວຂ້ອງ ໃນການ ຄຸ້ມຄອງຊັບພະຍາກອນປ່າໄມ້, ໂດຍສະເພາະໃນແຜນງານ REDD+. ເພື່ອໃຫ້ສອດຄ່ອງກັບການຕິດຕາມ ຄວາມທ່ຽງທຳຕາມສະພາບການນີ້, ຕົວຊີ້ວັດຫຼັກລຸ່ມນີ້ຕ້ອງໄດ້ຮັບການຕິດຕາມ:

| ບັນຫາຕົ້ນຕໍ | ປະເພດຂໍ້ມູນຂ່າວສານ/ຂໍ້ມູນຕົວເລກທີ່ຕ້ອງໄດ້ເກັບກຳສຳລັບການຕິດຕາມ |
|---|---|
| ຂະແໜງການຄຸ້ມຄອງປ່າໄມ້ທີ່ມີໃນປັດຈຸບັນ | • ສະຖາບັນຄຸ້ມຄອງປ່າໄມ້ທີ່ມີໃນປັດຈຸັນ,ເຊັ່ນ: ປັດຈຸບັນແມ່ນໃຜເປັນຜູ້ຕັດສິນໃຈກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ເປັນຫຍັງຈິ່ງຕ້ອງແມ່ນເຂົາເຈົ້າ ແລະ ເຂົາເຈົ້າມີການຄຸ້ມຄອງແນວໃດ?<br>• ສິ່ງກີດຂວາງໃຫ້ແກ່ການເຂົ້າຮ່ວມເຊັ່ນ: ອັນໃດທີ່ເປັນຈຸດສຳຄັນຂອງຄວາມແຕກຕ່າງໃນດ້ານສິດທິ, ການເຂົ້າເຖິງ ຫຼື ຂໍ້ຫ້າມ, ເຊັ່ນ: ດ້ານເຜົ່າຊົນ, ເພດ, ຊົນຊັ້ນ, ການສຶກສາ ແລະ ລະດັບການສຶກສາ, ອາຍຸ, ອາຊີບ, ທີ່ຕັ້ງ, ສະຖານະພາບຂອງຄອບຄົວ, ສາສະໜາ, ທັດສະນະດ້ານເພດ ແລະ ອື່ນໆ. ບັນຫາເຫຼົ່ານນີ້ໄດ້ສົ່ງຜົນກະທົບແນວໃດຕໍ່ບັນຫາຄວາມທ່ຽງທຳຂອງກຸ່ມຕ່າງໆ?<br>• ບັນຫາຂໍ້ຂັດແຍ່ງທີ່ມີໃນປັດຈຸບັນທີ່ພົວພັນເຖິງການນຳໃຊ້ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້. |
| ຄວາມສາມາດຂອງແຜນງານ REDD+ | • ລະດັບຄວາມຮັບຮູ້ ແລະ ລະດັບຄວາມຮູ້ຂອງຜູ້ທີ່ມີສ່ວນກ່ຽວຂ້ອງຫຼັກໃນການຕັດສິນໃຈ ແລະ ສະມາຊິກຊຸມຊົນອື່ນໆໃນດ້ານນະໂຍບາຍ ແລະ ກົດໝາຍທີ່ພົວພັນເຖິງການເຂົ້າເຖິງ ແລະ ການຄຸ້ມຄອງຊັບພະຍາກອນປ່າໄມ້;<br>• ດ້ານຄວາມຮູ້ທີ່ມີໃນປັດຈຸບັນກ່ຽວກັບການຄຸ້ມຄອງປ່າໄມ້,ການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ + ຢູ່ໃນກຸ່ມເສດຖະກິດ-ສັງຄົມທີ່ມີຄວາມແຕກຕ່າງຂອງຊຸມຊົນທ້ອງຖິ່ນ, ລວມທັງແມ່ຍິງ ແລະ ກຸ່ມຊົນເຜົ່າ, ແລະ ດ້ານອື່ນໆທີ່ພົວພັນເຖິງນະໂຍບາຍ ແລະ ແຜນການ.<br>• ແຜນງານພັດທະນາຄວາມສາມາດທີ່ໄດ້ເຂົ້າຮ່ວມໂດຍຜູ້ຕັດສິນໃຈລະດັບທ້ອງຖິ່ນ ແລະ ສະມາຊິກຊຸມຊົນອື່ນໆກ່ຽວກັບຜົນໄດ້ຮັບຂອງການຄຸ້ມຄອງປ່າໄມ້, ການປ່ຽນແປງຂອງ ດິນຟ້າອາກາດ ແລະ ແຜນງານ REDD+;<br>• ວັດທະນະທຳໃນການແບ່ງປັນ ແລະ ຮຽນຮູ້ຂອງກຸ່ມຕ່າງໆໃນຊຸມຊົນເຊັ່ນ:ໃນຊ່ວງກອງປະຊຸມສາມັນ; ການເພີ່ມເວລາເພື່ອແລກປ່ຽນຂໍ້ມູນຂ່າວສານຈາກ ຜູ້ທີ່ໄດ້ຮັບການຝຶກອົບຮົມໃຫ້ແກ່ຜູ້ອື່ນໆທີ່ບໍ່ມີຄວາມຄຸ້ນເຄີຍກັບຫົວຂໍ້ດັ່ງກ່າວ. |

[6] ວັດທະນະທຳໃນການແບ່ງປັນ ແລະ ຮຽນຮູ້ຂອງກຸ່ມຕ່າງໆໃນຊຸມຊົນເຊັ່ນ: ໃນຊ່ວງກອງປະຊຸມສາມັນ; ການເພີ່ມເວລາເພື່ອແລກປ່ຽນຂໍ້ມູນຂ່າວສານຈາກ ຜູ້ທີ່ໄດ້ຮັບການຝຶກອົບຮົມໃຫ້ແກ່ຜູ້ອື່ນໆທີ່ບໍ່ມີຄວາມຄຸ້ນເຄີຍກັບຫົວຂໍ້ດັ່ງກ່າວ.



# Q10

## ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງສູນຝຶກອົບຮົມປ່າໄມ້ຊຸມຊົນພາກພື້ ນອາຊີ-ປາຊີຟິກ (RECOFTC) ໃນການປັບປຸງຄວາມທ່ຽງທໍາໃນການຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດໂດຍອີງໃສ່ປ່າໄມ້ມີຫຍັງແດ່?

RECOFTC - ສູນສໍາລັບປະຊາຊົນ ແລະ ປ່າໄມ້ໄດ້ຮັບຮູ້ ແລະ ປະຕິບັດຫຼັກການຕ່າງໆຂອງການເຮັດວຽກ ທີ່ຄໍານຶງເຖິງສິດທິພື້ນຖານຂອງມະນຸດ - ກອບວຽກທີ່ລວມເອົາບັນທັດຖານ, ຫຼັກການຕ່າງໆ, ມາດຕະຖານ ແລະ ເປົ້າໝາຍຕ່າງໆຂອງລະບົບສິດທິມະນຸດສາກົນເຂົ້າໃນແຜນການ ແລະ ຂະບວນການພັດທະນາ. ໂດຍເນັ້ນໃສ່ການພັດທະນາຄວາມສາມາດ, RECOFTC ໄດ້ພັດທະນາເຄື່ອງມືທີ່ກ່ຽວຂ້ອງກັບການຝຶກອົບ ຮົມ ແລະ ການຄົ້ນຄວ້າ, ແລະ ໄດ້ດໍາເນີນແຜນງານການຝຶກອົບຮົມກ່ຽວກັບແນວຄວາມຄິດກ່ຽວກັບຄວາມ ທ່ຽງທໍາດ້ານສັງຄົມໃນການຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດໂດຍອີງໃສ່ປ່າໄມ້. ໂດຍສະເພາະ, ສອງແຜນງານລະດັບພາກພື້ນໄດ້ກາຍເປັນເຄື່ອງມືອັນສໍາຄັນໃຫ້ແກ່ການສົ່ງເສີມແນວຄວາມຄິດກ່ຽວກັບ ຄວາມທ່ຽງທໍາດ້ານສັງຄົມໃນການຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດ - ອົງການຮ່ວມມືແຫ່ງປະເທດ ນອກແວ - ໄດ້ໃຫ້ທຶນຊ່ວຍເຫຼືອແກ່ໂຄງການຮາກຖານຂອງແຜນງານ REDD+ ແລະ ອົງການພັດທະນາ ສາກົນແຫ່ງປະເທດອາເມລິກາ - ໄດ້ໃຫ້ທຶນຊ່ວຍເຫຼືອແກ່ແຜນງານ GREEN Mekong. ທັງສອງແຜນງານ ໄດ້ສົ່ງເສີມເຊິ່ງກັນ ແລະ ກັນໃນດ້ານທີ່ຕັ້ງ, ວິທີການເຮັດວຽກ ແລະ ກຸ່ມເປົ້າໝາຍ. ສາມປະເທດລຸ່ມແມ່ນໍ້າ ຂອງ (ສປປ ລາວ, ມຽນມາ ແລະ ຫວຽດນາມ) ມີຄວາມຄຸ້ນເຄີຍກັບທັງສອງແຜນງານນີ້ເປັນຢ່າງດີ; ນອກ ຈາກນັ້ນ, ໂຄງການຮາກຖານຂອງແຜນງານ REDD+ ມີເປົ້າໝາຍຢູ່ປະເທດອິນໂດເນເຊຍ ແລະ ເນປານ ແລະ ແຜນງານ GREEN Mekong ມີເປົ້າໝາຍຢູ່ປະເທດກໍາປູຊາ ແລະ ໄທ. ທັງສອງແຜນງານໄດ້ຮັບຮອງເອົາວິທີ ການເຮັດວຽກສົ່ງເສີມເຊິ່ງກັນ ແລະ ກັນເຂົ້າໃນການຈັດຕັ້ງປະຕິບັດຂອງຕົນຕາມລໍາດັບ, ເຊິ່ງໂຄງການ ຮາກຖານຂອງແຜນງານ REDD+ ເນັ້ນໃສ່ການເຮັດວຽກຢູ່ຂັ້ນຮາກຖານຂຶ້ນເຖິງລະດັບແຂວງ, ແລະ ແຜນ ງານ GREEN Mekong ເນັ້ນໃສ່ການເຮັດວຽກແຕ່ລະດັບແຂວງຂຶ້ນເຖິງລະດັບພາກພື້ນ.

ກຸ່ມເປົ້າໝາຍພື້ນຖານຂອງແຜນງານ GREEN
Mekong ແມ່ນພະກັກງານຂັ້ນແຂວງ ແລະ ອົງການຈັດຕັ້ງສັງຄົມ, ສ່ວນກຸ່ມເປົ້າໝາຍໂຄງການຮາກຖານຂອງແຜນງານ REDD+ ເນັ້ນໃສ່ຊຸມຊົນທີ່ອີງໃສ່ປ່າໄມ້ເປັນຫຼັກ, ອໍານາດການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ, ໂດຍສະເພາະແມ່ຍິງ, ກຸ່ມຊົນເຜົ່າ, ນັກຂ່າວ, ຄູອາຈານ, ນັກຮຽນ ແລະ ໄວໜຸ່ມ. ໂຄງການຂັ້ນຮາກຖານແຜນງານ REDD+ ໄດ້ເນັ້ນໃສ່ກິດຈະກໍາການປູກຈິດສໍານຶກ, ການຝຶກອົບຮົມ ແລະ ການພັດທະນາຄວາມສາມາດຢູ່ລະດັບທ້ອງຖິ່ນ ສ່ວນແຜນ ງານ GREEN Mekong ໄດ້ເນັ້ນໃສ່ບັນດາກິດຈະກໍາເຫຼົ່ານີ້ຢູ່ລະດັບຊາດ ແລະ ລະດັບພາກພື້ນ, ໃຫ້ມີ ຄວາມສອດຄ່ອງກັບຄວາມຕໍ່ເນື່ອງຂອງນະໂຍບາຍການພັດທະນາຂອງອົງກອນລະດັບພາກພື້ນເຊັ່ນ: ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ (ASEAN). ວິທີການເຮັດວຽກແບບຮອບດ້ານນີ້ບໍ່ພຽງແຕ່ຊ່ວຍ ໃນການພັດທະນາຄວາມສາມາດຂອງຄະນະບໍລິຫານງານຂອງພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນຮາກຖານເທົ່ານັ້ນ (ຜ່ານໂຄງການຮາກຖານຂອງແຜນງານ REDD+), ແຕ່ຍັງສະໜອງການເຊື່ອມໂຍງອັນສໍາຄັນລະຫວ່າງ ພາກ ສ່ວນທີ່ກ່ຽວຂ້ອງຂັ້ນຮາກຖານກັບຜູ້ມີອໍານາດໃນການຕັດສິນໃຈ ແລະ ຜູ້ຈັດຕັ້ງປະຕິບັດຢູ່ລະດັບຊາດ ແລະ ພາກພື້ນອີກດ້ວຍ (ຜ່ານແຜນງານ GREEN Mekong); ດັ່ງນັ້ນ ມັນຈຶ່ງເປັນການສ້າງການຮ່ວມມື ເພື່ອສົ່ງ ເສີມຫຼັກການຕ່າງໆຂອງຄວາມທ່ຽງທໍາດ້ານສັງຄົມໃນຂະແໜງປ່າໄມ້, ການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+, ຢູ່ພາກພື້ນອາຊີ-ປາຊີຟິກ.



ກ່ອນການພັດທະນາຄູ່ມືຄໍາຖາມ & ຄໍາຕອບສະບັບນີ້, ທັງສອງໂຄງການໄດ້ຮ່ວມກັນພັດທະນາຄູ່ມືຝຶກອົບ ຮົມກ່ຽວກັບການປັບປຸງຄວາມທ່ຽງທໍາຢູ່ຂັ້ນຮາກຖານໃນຂະແໜງປ່າໄມ້ ແລະ ການປ່ຽນແປງຂອງດິນຟ້າ ອາກາດ; ການອະທິບາຍທີ່ສາມາດເຂົ້າໃຈໄດ້ງ່າຍ ແລະ ໂດຍຫຍໍ້ຂອງອົງປະກອບຫຼັກຂອງຄວາມທ່ຽງທໍາໃນ ຂະແໜງປ່າໄມ້, ການປ່ຽນແປງຂອງດິນຟ້າອາກາດ ແລະ ແຜນງານ REDD+ ທີ່ສະໜອງຢູ່ໃນຄູ່ມືນີ້ແມ່ນ ອຸດົມການທີ່ປະກອບສ່ວນເຂົ້າໃນຄູ່ມືຝຶກອົບຮົມດັ່ງກ່າວ: *http://www.recoftc.org/training-manuals-and-guides/improving-grassroots-equity-forests-and-climate-change-context-training*

ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບຄວາມທ່ຽງທໍາ, ສາມາດເບິ່ງໄດ້ທີ່:

- ປະຕູສູ່ຄວາມທ່ຽງທໍາຢູ່ຂັ້ນຮາກຖານ: http://www.recoftc.org/project/green-mekong/ project/grassroots-equity-portal
- ວິດີໂອຄວາມທ່ຽງທໍາດ້ານບົດບາດຍິງຊາຍ: http://www.recoftc.org/project/green-mekong/videos/video-what-gender-equity
- ປຶ້ມຄູ່ມືຄວາມທ່ຽງທໍາດ້ານບົດບາດຍິງຊາຍ: http://www.recoftc.org/project/grassroots-capacity-building-redd/q-and/gender-redd- qa-handbook
- ແຜນງານ GREEN Mekong: http://www.recoftc.org/project/green-mekong
- ໂຄງການຮາກຖານຂອງແຜນງານ REDD+: http://www.recoftc.org/project/grassroots-capacity-building-redd



RECOFTC

**THE CENTER FOR PEOPLE AND FORESTS**

ພັນລະກິດ ສູນ RECOFTC ແມ່ນເພື່ອສົ່ງເສີມຄວາມສາມາດເພື່ອສ້າງສິດທິທີ່ເຂັ້ມແຂງກວ່າ, ມີການປັບປຸງການ ຄຸ້ມຄອງບໍລິຫານ ແລະ ຄວາມຍຸຕິທຳທີ່ສູງກວ່າເກົ່າ ເພື່ອສ້າງຜົນປະໂຫຍດໃຫ້ແກ່ຄົນທ້ອງຖິ່ນຢູ່ໃນພື້ນທີ່ຕ່າງໆ ທີ່ມີປ່າໄມ້ປົກຄຸມຢູ່ພາກພື້ນອາຊີ-ປາຊີຟິກໃຫ້ມີຄວາມຍືນຍົງ.

RECOFTC ເປັນອົງກອນທີ່ມີເອກະລັກສະເພາະ ແລະ ຄວາມສຳຄັນໃນການຮັກສາໂລກແຫ່ງປ່າໄມ້. ເປັນອົງການ ຈັດຕັ້ງທີ່ບໍ່ຫວັງຜົນປະໂຫຍດລະດັບສາກົນທີ່ມີຄວາມຊຳນານໃນການສ້າງຄວາມສາມາດດ້ານປ່າໄມ້ຊຸມຊົນ. RECOFTC ສົ່ງເສີມດ້ານເຄືອຄ່າຍຍຸດທະສາດ ແລະ ຜະສິດທິຜົນການ ຮ່ວມມືກັບລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະ ບານ,ອົງການຈັດຕັ້ງສັງຄົມ, ພາກເອກະຊົນ, ຜູ້ຄົນທ້ອງ ຖິ່ນ,ສະຖາບັນຄົ້ນຄວ້າ ແລະ ການສຶກສາໃນທົ່ວພາກພື້ນ ອາຊີ-ປາຊີຟິກ ແລະ ພາກພື້ນອື່ນໆ. ຈາກປະສົບການລະດັບສາກົນຫຼາຍກວ່າ 25 ປີ ແລະ ວິທີການເຮັດວຽກທີ່ຫຼາກຫຼາຍໃນການສ້າງຄວາມສາມາດ - ການເຂົ້າຮ່ວມໃນການຄົ້ນຄວ້າ ແລະ ການວິໄຈ, ສະຖານທີສາທິດ ແລະ ຜະລິດຕະພັນການຝຶກອົບຮົມ - RECOFTC ໄດ້ໃຫ້ບໍລິການດ້ານນະວັດຕະກຳ ໃຫ້ແກ່ຜູ້ຄົນ ແລະ ປ່າໄມ້.

ສູນຝຶກອົບຮົມປາມ້ຊຸມຊົນ (RECOFTC) - ສູນສໍາລັບປະຊາຊົນ ແລະ ປາໄມ້
ຕູ້ໄປສະນີ 1111
ຫ້ອງການໄປສະນີກະເສດສາດ
ບາງກອກ 10903, ປະເທດໄທ
ໂທ: (66-2) 940-5700
ແຟັກ: (66-2) 561-4880
ອີແມວ: info@recoftc.org
www.recoftc.org

ພິມຈາກເຈ້ຍທີນຳກັບມາໃຊ້ໃໝ່